

# ສຽງບໍ່ຄຳເຊໂປນ

ວາລະສານສຳລັບພະນັກງານ ແລະ ຜູ້ຮັບເໝົາຂອງບໍ່ຄຳ-ທອງ ເຊໂປນ

## ໃນສະບັບນີ້

**LXML ຮັກສາການຜະລິດທີ່ເຂັ້ມແຂງໃນເຄິ່ງຕົ້ນປີ 2022**

**ລາງວັນຜົນງານທີ່ພົ້ນເດັ່ນ ປະຈຳປີ 2021 ຂອງ ບໍລິສັດ ຊີເຟີງ**

**ການອວ່າຍແລວນໍ້າ ນໍ້າກອກຂອງ ໂຄງການເຊໂປນ ໄດ້ຮັບການຍ້ອງຍໍຊົມເຊີຍ ເປັນຕົວແບບໃນ ສປປ ລາວ**

**ກັນຍາ 2022**

ລ້ານຊ້າງ ມີເນໂຣນສ໌ ລິມິເຕັດ
万象矿业有限公司
CHIFENG LXML SEPON

# ສາລະບານ




2 LXML ຮັກສາການຜະລິດທີ່ເຂັ້ມແຂງໃນເຄິ່ງຕົ້ນປີ 2022
3 ປະທານ ບໍລິສັດ ຊີເຟິງ ຂຸດຄົ້ນຄຳ ຢັ້ງຢືນຕໍ່ຄວາມມຸ່ງໝັ້ນໃນການຂະຫຍາຍຕົວຂອງບໍລິສັດ ຢູ່ ສປປ ລາວ
5 ບໍລິສັດ ຊີເຟິງ ຈີຫຼີ ຂຸດຄົ້ນຄຳ ລົງນາມໃນສັນຍາຮ່ວມມືກັບລັດວິສາຫະກິດພັດທະນາແຮ່ທາດລາວ
7 LXML ມອບລາຍຮັບ US$41 ລ້ານໃຫ້ແກ່ລັດຖະບານລາວ ໃນປີ 2021
8 ລັດຖະມົນຕີ ກຊສ ແລະ ເຈົ້າແຂວງສະຫວັນນະເຂດ ເປີດຂົວຂ້າມນ້ຳກອກ
9 LXML ສະໜັບສະໜູນການປັບປຸງເສັ້ນທາງ 28A
10 ແມ່ຍິງໃນຂະແໜງຂຸດຄົ້ນບໍ່ແຮ່
11 ການສະເຫຼີມສະຫຼອງວັນວິສະວະກອນແມ່ຍິງສາກົນ
11 ການຍົກລະດັບຄວາມສາມາດດ້ານບໍ່ແຮ່ສູ່ລະດັບສາກົນຂອງບໍລິສັດ ຊີເຟິງຂຸດຄົ້ນຄຳ
12 ລາງວັນຜົນງານທີ່ພົ້ນເດັ່ນປະຈຳປີ 2021 ຂອງບໍລິສັດ ຊີເຟິງ
13 ໂຄງການນັກຮຽນຊ່າງເຕັກນິກ
14 LXML ຝຶກອົບຮົມ ຊ່າງສີມືແຮງງານລາວຈະຢຸດຜັດວັນປະກັນພຸ່ງ ແນວໃດ?
15 LXML ສະໜັບສະໜູນການຫຼອມ ແລະງານສົມ
16 ໂພດພຣະພຸດທະຮູບໃຫຍ່ອົງຕື້ອຸດຕະມະໂຊກ ຢູ່ແຂວງສະຫວັນນະເຂດ
17 LXML ປົກປັກຮັກສາມໍລະດົກທາງວັດທະນະທຳທີ່ມີອາຍຸຫຼາຍພັນປີ
19 ການພັດທະນາຊຸມຊົນ – ການບໍລິຈາກເຄື່ອງເອັກສ໌ເຣ ສຳລັບ ໂຮງໝໍເມືອງວິລະບູລີ
19 ການຂົນຂວາຍຊຸມຊົນກ່ຽວກັບ ຄວາມປອດໄພໃນບໍ່ແຮ່
20 ຊຸມຊົນທ້ອງຖິ່ນຢ້ຽມຢາມໂຄງການສຳຫຼວດບໍ່ແຮ່ໃຕ້ດິນ ຂອງ ເຊໂປນ
21 LXMLຈັດພິທີເປີດ ອຸມົງທາງເຂົ້າເພື່ອເຈາະສຳຫຼວດບໍ່ແຮ່ໃຕ້ດິນ
23 ການອວ່າຍແລວນ້ຳ ນ້ຳກອກຂອງໂຄງການເຊໂປນ ໄດ້ຮັບການຍ້ອງຍໍຊົມເຊີຍ ເປັນຕົວແບບໃນ ສປປ ລາວ
23 ໂຄງການເຊໂປນນຳໃຊ້ເຄື່ອງຕິດຕາມການເໜັງຕີງຫຼັງຈາກການລະເບີດຫີນ
24 10 ອັນດັບບໍ່ແຮ່ ທີ່ໃຫຍ່ທີ່ສຸດໃນໂລກ
25 ຄາດຕະກອນໃນເງົາມືດ
27 ໜ່ວຍຮັບມືເຫດສຸກເສີນຈາກ LXML ກອບກູ້ເອົາຊີວິດຜູ້ລັກລອບຂຸດຄົ້ນແຮໃນແຂວງສະຫວັນນະເຂດ
28 ການປິດສ້ອມແປງໂຮງງານປະຕິບັດໄດ້ ຢ່າງປອດໄພ ແລະ ປະສິດທິຜົນສູງ
30 ຜົນງານຂອງປີ 2021




ວາລະສານ ສຽງບໍ່ຄຳເຊໂປນ ຍິນດີຮັບເອົາ ແລະ ພິມເຜີຍແຜ່ ຂ່າວສານ ແລະ ຮູບພາບຂອງທ່ານ. ນອກຈາກນີ້ ພວກເຮົາ ຂໍຮຽນເຊີນທ່ານຈົ່ງສົ່ງຂໍ້ມູນກ່ຽວກັບງານ, ກິດຈະກຳ ຫຼື ວັນສຳຄັນ ຂອງພະແນກທ່ານ ທີ່ ທ່ານຄິດວ່າ ຈະເປັນຂໍ້ມູນດີໆ ສຳລັບຜູ້ອ່ານ ຂອງພວກເຮົາ ເປັນຕົ້ນແມ່ນ ງານທີ່ທ່ານເປັນຜູ້ຈັດ ຫຼື ຈະເຂົ້າຮ່ວມ.



# LXML ຮັກສາການຜະລິດທີ່ເຂັ້ມແຂງ ໃນເຄິ່ງຕົ້ນປີ 2022

ໃນເຄິ່ງຕົ້ນປີ 2022 ມາຮອດທີ 30 ມິຖຸນາ, ບໍ່ຄຳ-ທອງເຊໂປນ ສາມາດຜະລິດ ຄຳໄດ້ 99.128 ອອນສ໌ (2,810 ໂຕນ) ແລະ ແຜ່ນທອງສຳເລັດຮູບໄດ້ 3.933 ໂຕນ, ເພີ່ມຂຶ້ນ 15% ທຽບໃສ່ໄລຍະດຽວກັນຂອງປີກາຍ.

ໃນປີ 2021, ບໍ່ຄຳ-ທອງເຊໂປນ ສາມາດຜະລິດຄຳ 192.988 ອອນສ໌ (6,003 ໂຕນ), ແລະ ທອງໄດ້ 5.341 ໂຕນ.

ໃນປີ 2021, LXML ປະກອບສ່ວນເປັນລາຍຮັບໂດຍກົງໃຫ້ແກ່ລັດຖະບານ ລາວ ຈຳນວນ US$40.843.028,09 ຈາກການຈ່າຍພາສີຊັບພະຍາກອນແຮ່ທາດ, ອາກອນຕ່າງໆ ແລະ ເງິນປັນຜົນ.

ນັບຕັ້ງແຕ່ເລີ່ມການຜະລິດໃນປີ 2003, ບໍ່ຄຳ-ທອງເຊໂປນ ໄດ້ປະກອບສ່ວນເປັນລາຍຮັບໂດຍກົງໃຫ້ແກ່ລັດຖະບານລາວກວ່າ US$1,6 ຕື້ ຈາກການຈ່າຍອາກອນ, ພາສີຊັບພະຍາກອນທຳມະຊາດ ແລະ ເງິນປັນຜົນ. ນອກຈາກນັ້ນຍັງໄດ້ປະກອບສ່ວນຫຼາຍຮ້ອຍລ້ານໂດລາສະຫະລັດຈາກການສ້າງວຽກເຮັດງານທຳ, ການຝຶກອົບຮົມ, ການພັດທະນາຊຸມຊົນ ແລະ ທຸລະກິດທ້ອງຖິ່ນ. ບໍ່ຄຳ-ທອງເຊໂປນ ສ້າງວຽກເຮັດງານທຳໃຫ້ແກ່ຄົນທ້ອງຖິ່ນຫຼາຍກວ່າ 5000 ຄົນ.

ຂ້າພະເຈົ້າ ມີຄວາມພາກພູມໃຈຕໍ່ການປະກອບສ່ວນອັນດີເລີດນີ້ ຂອງ ພະນັກງານ LXML ທັງໝົດໃນການບັນລຸເປົ້າໝາຍການຜະລິດ. ບໍລິສັດຊີເຟິງ LXML ມີຄວາມພາກພູມໃຈໃນການເປັນຄູ່ຮ່ວມພັດທະນາໃນ ສປປ ລາວ.

ໃນການພົບປະຢ່າງອົບອຸ່ນກັບ ພະນະທ່ານ ປອ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ, ພະນະທ່ານ ປອ ສອນໄຊ ສີພັນດອນ ຮອງນາຍົກລັດຖະມົນຕີ, ທ່ານນາງ ບຸນຄຳ ວໍລະຈິດ ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ທ່ານ ບຸນໂຈມ ອຸບົນປະເສີດ ລັດຖະມົນຕີ ກະຊວງການເງິນ, ທ່ານ ປອ ດາວວົງ ພອນແກ້ວ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ແລະ ທ່ານ ສັນຕິພາບ ພົມວິຫານ ເຈົ້າແຂວງໆ ສະຫວັນນະເຂດ, ທ່ານ ຫວາງ ຈຸ້ນຫົວ ໄດ້ຢັ້ງຢືນຄວາມມຸ່ງໝັ້ນຂອງ ບໍລິສັດຊີເຟິງ ໃນການເພີ່ມທະວີການພົວພັນ ແລະ ລົງທຶນ ໃນ ສປປ ລາວ ເພື່ອພັດທະນາໂຄງການຄຳ, ທອງ ແລະ ແຮ່ຫາຍາກ.

ທຸກອົງກອນສະແຫວງຫາການພັດທະນາໄລຍະຍາວ ແລະ ສິ່ງນີ້ ຈະເປັນຜົນສຳເລັດທີ່ດີທີ່ສຸດ ຈາກການຮ່ວມມືກັບອຳນາດການປົກຄອງທ້ອງຖິ່ນ ແລະ ທີມງານ ຢ່າງເຂັ້ມແຂງ ແລະ ມີເປົ້າໝາຍອັນດຽວກັນ. ການລົງທຶນໃນໂຄງການໃໝ່ຈະສ້າງຜົນປະໂຫຍດໃຫ້ແກ່ປະຊາຊົນ ແລະ ລັດຖະບານລາວ. ຂ້າພະເຈົ້າມີຄວາມພາກພູມໃຈຕໍ່ຜົນສຳເລັດຂອງ LXML ໃນການສ້າງວຽກເຮັດງານທຳ, ຝຶກອົບຮົມ, ພັດທະນາຊຸມຊົນ ແລະ ປະກອບສ່ວນສ້າງລາຍຮັບໃຫ້ແກ່ລັດຖະບານລາວ.

ບໍລິສັດ ຊີເຟິງ ຈີຫຼີຂຸດຄົ້ນຄຳ ໄດ້ຖືຫຸ້ນ 90% ໃນ LXML ເຊິ່ງເປັນເຈົ້າຂອງ ແລະ ດຳເນີນໂຄງການຄຳ-ທອງ ເຊໂປນ ຢູ່ ແຂວງສະຫວັນນະເຂດ.

ໃນເດືອນກໍລະກົດ 2022, ບໍລິສັດ ຊີເຟິງ ຂຸດຄົ້ນຄຳ ໄດ້ເຊັນສັນຍາຮ່ວມມືຄັ້ງປະຫວັດສາດ ກັບລັດວິສະຫະກິດພັດທະນາແຮ່ທາດລາວ ໃນການສຳຫຼວດ ແລະ ພັດທະນາຊັບພະຍາກອນແຮ່ທາດເພີ່ມຕື່ມ ເພື່ອພັດທະນາການຜະລິດຂະໜາດໃຫຍ່ໃນອະນາຄົດ ຢູ່ ສປປ ລາວ.

ສັນຍາສະບັບນີ້ ຍົກໃຫ້ເຫັນຄວາມໝາຍໝັ້ນທີ່ມີມາຍາວນານຂອງບໍລິສັດໃນການພັດທະນາຂະແໜງການບໍ່ແຮ່ ຢູ່ ສປປ ລາວ.

ໃນເດືອນເມສາ 2022, LXML ໄດ້ປະກອບສ່ວນ US$5 ລ້ານ ໃຫ້ແກ່ແຂວງສະຫວັນນະເຂດ ໃນການຍົກລະດັບເສັ້ນທາງຂອງລັດ ເລກ 28A, ຊຶ່ງເປັນເສັ້ນທາງຂົນສົ່ງທີ່ສຳຄັນໃນການຂະຫຍາຍການເຊື່ອມໂຍງຕາເວັນອອກ-ຕາເວັນຕົກ ຂອງ ສປປ ລາວ, ໄທ ແລະ ສສ ຫວຽດນາມ. ການລົງທຶນຄັ້ງນີ້ຈະຊ່ວຍເພີ່ມໂອກາດສຳລັບການຄ້າ ແລະ ການທ່ອງທ່ຽວໃນພາກພື້ນດັ່ງກ່າວ.

ໃນເດືອນພຶດສະພາ 2022, LXML ໄດ້ເລີ່ມການກໍ່ສ້າງອຸບມົງບໍ່ແຮ່ໃຕ້ດິນທີ່ທັນສະໄໝແຫ່ງທຳອິດຂອງ ສປປ ລາວ ໂດຍຄາດວ່າມີປະລິມານສະສົມແຮ່ປະມານ 9.5 ລ້ານໂຕນ ແລະ ຈະສາມາດຜະລິດແຮ່ເພີ່ມຂຶ້ນຈາກ 400.000 ໂຕນໃນປີ 2023 ຂຶ້ນເປັນ 1,2 ລ້ານໂຕນ ຕໍ່ປີຫຼັງຈາກນັ້ນ. ບໍ່ໃຕ້ດິນດິສໂຄເວີຣີດີບ ຈະຍືດອາຍຸຂອງໂຄງການເຊໂປນ ອອກໄປຕື່ມອີກ 7 ປີ ຈົນເຖິງປີ 2030 ປະກອບສ່ວນໃສ່ການພັດທະນາແບບຍືນຍົງໃຫ້ແກ່ຊຸມຊົນເຈົ້າພາບກໍຄືປະຊາຊົນລາວ.

ຢູ່ເຂດບໍ່ຄຳ-ທອງ ເຊໂປນ ມີປະຫວັດສາດການຂຸດຄົ້ນບໍ່ແຮ່ມາຫຼາຍພັນປີ. ການພັດທະນາໃໝ່ນີ້ຈະນຳໃຊ້ອຸປະກອນທີ່ທັນສະໄໝ ແລະ ເຕັກນິກການຂຸດຄົ້ນບໍ່ແຮ່ທີ່ກ້າວໜ້າ ເພື່ອ ຖ່າຍທອດຄວາມຮູ້ ແລະ ທັກສະໃຫ້ແກ່ ພະນັກງານ ແລະ ຜູ້ຮັບເໝົາຄົນລາວ ກໍຄື ວິຊາການມືອາຊີບດ້ານບໍ່ແຮ່ທີ່ເປັນຄົນລາວ ເພື່ອວາງມາດຕະຖານໃໝ່ໆ ສຳລັບ ການຂຸດຄົ້ນບໍ່ແຮ່ໃຕ້ດິນ.

ບໍ່ຄຳ-ທອງ ເຊໂປນໄດ້ຮັບການຈັດອັນດັບ ປະເພດ A+ ຢ່າງຕໍ່ເນື່ອງ ໜຶ່ງດຽວໃນ ສປປ ລາວ ຊຶ່ງອອກໃຫ້ໂດຍກະຊວງພະລັງງານ ແລະ ບໍ່ແຮ່ ສຳລັບຄວາມມຸ່ງໝັ້ນໃນການປະກອບສ່ວນຕໍ່ການພັດທະນາເສດຖະກິດ-ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ, ປົກປັກຮັກສາສິ່ງແວດລ້ອມ ແລະ ຮັກສາມາດຕະຖານການດຳເນີນງານໃນລະດັບສາກົນ.

LXML ຈະສືບຕໍ່ລົງທຶນໃນການຝຶກອົບຮົມ ແລະ ພັດທະນາ. ມາຮອດເດືອນ ມິຖຸນາ 2022, LXML ໄດ້ຈັດການຝຶກອົບຮົມກວ່າ 23,000 ຊົ່ວໂມງ ໃຫ້ແກ່ພະນັກງານຄົນລາວ ທັງການຝຶກອົບຮົມພາຍໃນ, ພາຍນອກ ແລະ ໃນໜ້າວຽກ ແລະ ການສຶກສາຢູ່ຕ່າງປະເທດ. ໃນເຄິ່ງປີຫຼັງ 2022, LXML ຈະຈັດຕັ້ງຫຼັກສູດ ໂຄງການນັກຮຽນຊ່າງເຕັກນິກ ຊຶ່ງເລັ່ງໃສ່ຄົນທ້ອງຖິ່ນ ແລະ ໂຄງການພັດທະນາຫົວໜ້າຄຸມງານ ແລະ ຜູ້ນຳ ເພື່ອຍົກລະດັບທັກສະໃຫ້ບຸກຄະລາກອນຄົນລາວ.

ຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມ ຂອງ ພະນັກງານ LXML ຍັງສືບຕໍ່ເຂັ້ມແຂງ ຊຶ່ງ



ພະນັກງານຍິງກວມເອົາ 24% ແລະ 95% ຂອງພະນັກງານທັງໝົດ, ແລະ ໃນນັ້ນ 80% ແມ່ນຄົນທ້ອງຖິ່ນເມືອງວິລະບູລີ ແລະ ແຂວງສະຫວັນນະເຂດ.

ວຽກງານດ້ານເຕັກນິກ ແລະ ການສຳຫຼວດ ແລະ ພັດທະນາ ໂຄງການບໍ່ແຮ່ໃຕ້ດິນ ຊຶ່ງຕ້ອງການພະນັກງານຄົນລາວກວ່າ 300 ຄົນໃນປີ 2022. ນີ້ໂອກາດສຳລັບການເຮັດວຽກຢູ່ໂຄງການເຊໂປນ.

ການແຜ່ລະບາດຂອງພະຍາດ COVID19 ໄດ້ສ້າງຄວາມທ້າທາຍມະຫາສານຕໍ່ສຸຂະພາບ ແລະ ຄວາມປອດໄພ, ການຂົນສົ່ງ ແລະ ການດຳເນີນງານ. LXML ໄດ້ເຮັດວຽກປະສານງານຢ່າງໃກ້ຊິດກັບເຈົ້າໜ້າທີ່ສາທາລະນະສຸກ ແລະ ລັດຖະບານຂັ້ນທ້ອງຖິ່ນ, ແຂວງ ແລະ ສູນກາງ ເພື່ອຮັບປະກັນການປົກປ້ອງພະນັກງານ ແລະ ຊຸມຊົນ. ພາຍໃຕ້ການຮ່ວມມືກັບພະແນກສາທາລະນະສຸກແຂວງສະຫວັນນະເຂດ, ພະນັກງານ LXML ແລະ ຜູ້ຮັບເໝົາ ໄດ້ຮັບການສັກວັກຊີນປ້ອງກັນ COVID19 ຢ່າງຄົບຖ້ວນ ພ້ອມທັງເຂັມກະຕຸ້ນ. LXML ໄດ້ປະກອບສ່ວນປະມານ US$500.000 ໃຫ້ແກ່ລັດຖະບານລາວ ໃນການປ້ອງກັນ ແລະ ຮັບມືກັບ COVID19 ລວມທັງການສະໜັບສະໜູນສະຖານທີ່ຈຳກັດບໍລິເວນ, ເຄື່ອງກວດແບບ PCR ແລະ ອຸປະກອນການແພດອື່ນໆ.

ແຜນງານກອງທຶນພັດທະນາທ້ອງຖິ່ນ ຂອງ ບໍ່ຄຳ-ທອງເຊໂປນ ແມ່ນສຸມໃສ່ການຮັບປະກັນສະບຽງອາຫານ, ການສຶກສາ ແລະ ສຸຂະພາບ. ດ້ວຍການສະໜັບສະໜູນຊຸມຊົນທີ່ດ້ອຍໂອກາດ ຢ່າງມີເປົ້າໝາຍແນໃສ່ ປັບປຸງຊີວິດການເປັນຢູ່, ການເຂົ້າເຖິງນ້ຳສະອາດ, ສຸຂະອະນາໄມ, ຊົນລະປະທານ ແລະ ໂຄງລ່າງພື້ນຖານອື່ນໆ, LXML ໄດ້ຍົກລະດັບເມືອງວິລະບູລີ ອອກຈາກເມືອງທີ່ທຸກຍາກທີ່ສຸດ ໂດຍສາມາດລື່ນຄາດໝາຍໃນການຫລຸດຜ່ອນຄວາມທຸກຍາກຂອງລັດຖະບານ. ບໍລິສັດໄດ້ສະໜັບສະໜູນການສ້າງຕັ້ງລະບົບ ການສະໜອງນ້ຳປະປາໃນເມືອງວິລະບູລີ, ໂຮງໝໍເມືອງ, ສຸກສາລາ, ໂຮງຮຽນ ພ້ອມທັງໃຫ້ທຶນການສຶກສາ.

LXML ສ້າງຊີວິດການເປັນຢູ່ ທີ່ດີຂຶ້ນໃຫ້ແກ່ຄົນຮຸ່ນໃໝ່. ມາຮອດປັດຈຸບັນ, ບໍລິສັດ ໄດ້ລົງທຶນກວ່າ US$11 ລ້ານ ໃນເມືອງວິລະບູລີ ໂດຍຜ່ານກອງທຶນພັດທະນາທ້ອງຖິ່ນ ແລະ ສ້າງລາຍຮັບໃຫ້ແກ່ຊຸມຊົນ ກວ່າ US$49 ລ້ານ ໂດຍຜ່ານກຸ່ມທຸລະກິດທ້ອງຖິ່ນ. LXML ຈະສືບຕໍ່ລົງທຶນໃສ່ຊັບພະຍາກອນຄົນລາວ ເພື່ອພັດທະນາຊີວິດການເປັນຢູ່ແບບຍືນຍົງ ແລະ ປັບປຸງໂອກາດສຳລັບອະນາຄົດ.



# ປະທານ ບໍລິສັດ ຊີເຟິງ ຂຸດຄົ້ນຄໍາ ຢັ້ງຢືນ ຄວາມມຸ່ງໝັ້ນໃນການຂະຫຍາຍຕົວ

**ກໍລະກົດ 2022 -** ທ່ານ ຫວາງ ຈຽ້ນຫົວ, ປະທານ ບໍລິສັດ ຊີເຟິງ ຂຸດຄົ້ນຄໍາ ໄດ້ຮັບການເຂົ້າຢ້ຽມຂໍານັບການນໍາຂັ້ນສູງ ທີ່ນະຄອນຫຼວງວຽງຈັນ ເພື່ອລາຍງານຄວາມຄືບໜ້າກ່ຽວກັບການລົງທຶນ ແລະ ການປະກອບສ່ວນອັນພົ້ນເດັ່ນຂອງບໍລິສັດ ຕໍ່ການພັດທະນາເສດຖະກິດ ແລະ ສັງຄົມ ໃນ ສປປ ລາວ ແລະ ຢັ້ງຢືນແຜນສໍາລັບການຂະຫຍາຍຕົວໃນອະນາຄົດ ໂດຍການຮ່ວມມືກັບລັດຖະບານລາວ. ບໍລິສັດ ຊີເຟິງ ຈີຫຼົງ ຂຸດຄົ້ນຄໍາໄດ້ຖືຫຸ້ນ 90% LXML ເຊິ່ງເປັນເຈົ້າຂອງ ແລະ ດໍາເນີນໂຄງການຄໍາ-ທອງ ເຊໂປນຢູ່ ເມືອງວິລະບູລີ, ແຂວງສະຫວັນນະເຂດ.

ທ່ານ ຫວາງ ຈຽ້ນຫົວ ໄດ້ຢັ້ງຢືນຄວາມມຸ່ງໝັ້ນຂອງຊີເຟິງ ໃນການເພີ່ມທະວີການພົວພັນ ແລະ ລົງທຶນໃນ ສປປ ລາວ ເພື່ອພັດທະນາໂຄງການຄໍາ, ທອງ ແລະ ແຮ່ຫາຍາກ ໃນ



ເວລາທີ່ພົບປະຢ້ຽມຢາມອຸ່ນກັບ ພະນະທ່ານ ປອ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ, ພະນະທ່ານ ປອ ສອນໄຊ ສີພັນດອນ ຮອງນາຍົກລັດຖະມົນຕີ, ທ່ານນາງ ບຸນຄໍາ ວໍລະຈິດ ລັດຖະມົນຕີກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ທ່ານ ບຸນໂຈມ ອຸບົນປະເສີດ ລັດຖະມົນຕີ ກະຊວງການເງິນ, ທ່ານ ປອ ດາວວົງ ພອນແກ້ວ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ແລະ ທ່ານ ສັນຕິພາບ ພົມວິຫານ ເຈົ້າແຂວງສະຫວັນນະເຂດ.

**ທ່ານ ຫວາງ ຈຽ້ນຫົວ** ກ່າວວ່າ: "ການລົງທຶນໃນໂຄງການບໍ່ແຮ່ໃໝ່ ຈະສ້າງຜົນປະໂຫຍດທາງບວກໃຫ້ແກ່ທັງປະຊາຊົນ ແລະ ລັດຖະບານລາວ."

"ຂ້າພະເຈົ້າ ມີຄວາມພາກພູມໃຈຕໍ່ຜົນສໍາເລັດຂອງ LXML ໃນ ສປປ ລາວ ໂດຍສະເພາະການສ້າງວຽກເຮັດງານທໍາ, ການຝຶກອົບຮົມ, ການພັດທະນາຊຸມຊົນ, ແລະ ການປະກອບສ່ວນສ້າງລາຍຮັບໃຫ້ແກ່ລັດຖະບານລາວ."

ໃນບໍ່ດົນມານີ້, ບໍລິສັດ ຊີເຟິງ ໄດ້ເຊັນສັນຍາຮ່ວມມືຄັ້ງປະຫວັດສາດ ກັບ ລັດວິສະຫະກິດພັດທະນາແຮ່ທາດລາວ ໃນການສໍາຫຼວດ ແລະ ພັດທະນາຊັບພະຍາກອນແຮ່ທາດເພີ່ມຕື່ມ ຢູ່ໃນ ສປປ ລາວ.

**ທ່ານ ຫວາງ ຈຽ້ນຫົວ** ກ່າວຕື່ມອີກວ່າ "ການຮ່ວມມືໃນຄັ້ງນີ້ ໄດ້ສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນໃນການຂະຫຍາຍຕົວ ແລະ ການພັດທະນາຂະແໜງການບໍ່ແຮ່ ຂອງບໍລິສັດ ຊີເຟິງ ຢູ່ໃນ ສປປ ລາວ".

"ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈມາຍັງລັດຖະບານລາວ ທີ່ໄດ້ໃຫ້ການສະໜັບສະໜູນໂຄງການຄໍາ-ທອງ ເຊໂປນ ແລະ ແຜນການຂະຫຍາຍຕົວຂອງບໍລິສັດ."

ໃນການປຶກສາຫາລືກັບການນໍາຂອງລັດຖະບານລາວ, ທ່ານ ຫວາງ ຈຽ້ນຫົວ ໄດ້ຢັ້ງຢືນວ່າ ບໍລິສັດ ຊີເຟິງ ຈະສືບຕໍ່ຮັກສາມາດຕະຖານການດໍາເນີນງານໃນລະດັບສາກົນດ້ານຄວາມປອດໄພ, ການຮັກສາສິ່ງແວດລ້ອມ, ການພັດທະນາຊຸມຊົນ ແລະ ການພັດທະນາ ແລະ ຍົກລະດັບບຸກຄະລາກອນຄົນລາວ.










LXML ແລະ ລັດຖະບານລາວ ໄດ້ສ້າງສາຍພົວພັນອັນແໜ້ນແຟ້ນ ໃນການຮ່ວມມືເປັນເວລາຜ່ານມາກວ່າ 30 ປີ.

ບໍ່ຄໍາ-ທອງ ເຊໂປນ ມີຄວາມພາກພູມໃຈທີ່ໄດ້ຮັກສາມາດຕະຖານສາກົນທີ່ສູງທີ່ສຸດ ແລະ ສາມາດຮັກສາມາດຕະຖານໃນລະດັບ A+ ຊຶ່ງອອກໃຫ້ໂດຍກະຊວງພະລັງງານ ແລະ ບໍ່ແຮ່ ຢ່າງສະເໝີມາ ແລະ ເປັນທີ່ຍອມຮັບໄດ້ວ່າ LXML ໄດ້ເປັນແບບຢ່າງທີ່ດີເລີດໃຫ້ແກ່ບໍລິສັດບໍ່ແຮ່ອື່ນໆ ຢູ່ໃນ ສປປ ລາວ.

ໃນປີນີ້, ບໍລິສັດ ຊີເຟິງ LXML ໄດ້ເລີ່ມດໍາເນີນການກໍ່ສ້າງອຸບມົງ ເພື່ອສໍາຫຼວດບໍ່ແຮ່ໃຕ້ດິນທີ່ທັນສະໄໝແຫ່ງທໍາອິດຢູ່ໃນ ສປປ ລາວ, ຊຶ່ງຈະເປັນຕົວແບບໃຫ້ແກ່ບໍລິສັດອື່ນໆ ໃນອຸດສະຫະກໍາບໍ່ແຮ່.

ນັບແຕ່ເລີ່ມດໍາເນີນງານໃນປີ 2003, LXML ໄດ້ຜະລິດແຜ່ນທອງຫຼາຍກວ່າ 1,1 ລ້ານໂຕນ ແລະ ແທ່ງຄໍາກວ່າ 1,5 ລ້ານ ອອນສ໌ ພ້ອມທັງໄດ້ປະກອບສ່ວນຫຼາຍກວ່າ US$1,6 ຕື້ ເປັນລາຍຮັບໂດຍກົງໃຫ້ແກ່ລັດຖະບານລາວ ໂດຍຜ່ານການຊໍາລະພາສີ-ອາກອນ, ຄ່າຊັບພະຍາກອນແຮ່ທາດ ແລະ ເງິນປັນຜົນ. ນອກຈາກນັ້ນ ບໍລິສັດ ກໍໄດ້ສ້າງຜົນປະໂຫຍດທາງອ້ອມຫຼາຍຮ້ອຍລ້ານໂດລາ ເຂົ້າໃນການສ້າງວຽກເຮັດງານທໍາ, ການຝຶກອົບຮົມ, ການພັດທະນາຊຸມຊົນ ແລະ ການສົ່ງເສີມທຸລະກິດທ້ອງຖິ່ນ.

ໃນປີ 2021, ໂຄງການຄໍາ-ທອງ ເຊໂປນ ຜະລິດທອງໄດ້ຫຼາຍກວ່າ 5.341 ໂຕນ ແລະ ແທ່ງຄໍາກວ່າ 192.988 ອອນສ໌. ໃນປີ 2022, ຄາດວ່າຈະສາມາດຜະລິດແທ່ງຄໍາໄດ້ 224.000 ອອນສ໌ (7 ໂຕນ) ແລະ ແຜ່ນທອງ 8.000 ໂຕນ.






# ບສ ຊື່ເຟີງ ລົງນາມ ໃນສັນຍາຮ່ວມມືກັບ ລັດວິສາຫະກິດພັດທະນາແຮ່ທາດລາວ

**11 ກໍລະກົດ 2022** - ບໍລິສັດ ຊື່ເຟີງ ຈີຫຼົງ ຂຸດຄົ້ນຄໍາ ໄດ້ລົງນາມໃນສັນຍາການຮ່ວມມື ກັບ ລັດວິສາຫະກິດ ພັດທະນາແຮ່ທາດ ລາວ (ພຣລ) ເປັນຄັ້ງປະຫວັດສາດ. ສັນຍາ ດັ່ງກ່າວຈະຊ່ວຍໃຫ້ທຸກໆຝ່າຍສຸມໃສ່ການ ສໍາຫຼວດ ແລະ ພັດທະນາແຫຼ່ງແຮ່ຕ່າງໆ ເພື່ອໃຫ້ກາຍເປັນໂຄງການຂະໜາດໃຫຍ່ ໃນອະນາຄົດ ຢູ່ໃນ ສປປ ລາວ.

**ທ່ານ ພໍ ແຮຣິສ, ປະທານ LXML** ໄດ້ກ່າວ ວ່າ: "ສັນຍາສະບັບນີ້ ຍົກໃຫ້ເຫັນຄວາມ ໝາຍໝັ້ນທີ່ມີມາຍາວນານຂອງບໍລິສັດ ຊື່ ເຟີງ ໃນການເຕີບໂຕ ແລະ ການພັດທະນາ ຂະແໜງການບໍ່ແຮ່ ຢູ່ໃນ ສປປ ລາວ."

"ຄະນະຂອງພວກເຮົາພ້ອມເຮັດວຽກຮ່ວມມື ກັບລັດຖະບານລາວ ເພື່ອພັດທະນາອີກ ຫຼາຍໆໂຄງການທີ່ຈະປະສົບຜົນສໍາເລັດ ໃຫ້ຄືກັນກັບໂຄງການຄໍາ-ທອງ ເຊໂປນ. ບໍລິສັດ ຊື່ເຟີງ ແລະ ພຣລ ຈະດໍາເນີນການ ສໍາຫຼວດ ເພື່ອລິເລີ່ມໂຄງການບໍ່ແຮ່ລະດັບ ໂລກ ເພື່ອສ້າງຜົນປະໂຫຍດຮ່ວມກັນຂອງ ຜູ້ມີສ່ວນຮ່ວມ ໂດຍສະເພາະແມ່ນປະຊາຊົນ ລາວ."

"ໂດຍຮ່ວມມືກັບ ພຣລ ແລະ ລັດຖະບານ ລາວ, ຄະນະພວກເຮົາພ້ອມສ້າງພື້ນຖານ ອັນເຂັ້ມແຂງ ເພື່ອຂະຫຍາຍການລົງທຶນ ຢ່າງມະຫາສານໃນ ສປປ ລາວ ຂອງບໍລິສັດ ຊື່ເຟີງ. ບໍລິສັດ ຈະຮັກສາມາດຕະຖານ ສາກົນທີ່ເປັນທີ່ຮູ້ຈັກຢ່າງກວ້າງຂວາງ ໂດຍສະເພາະ ໃນດ້ານຄວາມປອດໄພ, ສິ່ງແວດລ້ອມ, ການພັດທະນາຊຸມຊົນ ແລະ ການກໍ່ສ້າງພະນັກງານລາວ."

**ທ່ານ ບຸນຍົງ ສີດາວົງ, ຜູ້ອໍານວຍການໃຫຍ່ ລັດວິສາຫະກິດພັດທະນາແຮ່ທາດລາວ** ໄດ້ ກ່າວວ່າ: "ສັນຍາສະບັບນີ້ ຊຸກຍູ້ໃຫ້ມີການ ສໍາຫຼວດເຂດທີ່ມີທ່າແຮງດ້ານແຮ່ທາດ ກ່ອນ ທີ່ຈະເຂົ້າສູ່ສັນຍາສໍາປະທານ."

"ພຣລ ມີຄວາມເຊື່ອໝັ້ນ ໃນຄວາມ ຊໍານິຊໍານານ ແລະ ຄວາມພ້ອມຂອງ ບໍລິສັດ ຊື່ເຟີງ ທີ່ຈະນໍາສູ່ຜົນສໍາເລັດ ເຊິ່ງເຫັນໄດ້ ຈາກຜົນງານດ້ານການດໍາເນີນໂຄງການ ຂຸດຄົ້ນ ແລະ ປຸງແຕ່ງຄໍາ-ທອງ ເຊໂປນ. ສະນັ້ນ, ການຊອກຫາເຂດທີ່ມີທ່າແຮງດ້ານ ແຮ່ທາດ ເປັນສິ່ງສໍາຄັນຕັດສິນ ໃນນັ້ນ: ການ ສະໜັບສະໜູນຈາກລັດຖະບານ, ຂະແໜງ ການກ່ຽວຂ້ອງ ແລະ ຊຸມຊົນທ້ອງຖິ່ນ ແມ່ນ ມີຄວາມຈໍາເປັນ ໃຫ້ແກ່ການພັດທະນາ ຂະແໜງບໍ່ແຮ່ ໃນ ສປປ ລາວ."

LXML ແລະ ລັດຖະບານລາວໄດ້ມີສາຍ ພົວພັນທີ່ດີ ແລະ ປະສົບຜົນສໍາເລັດມາຫຼາຍ ກວ່າ 30 ປີ. ບໍ່ຄໍາ-ທອງ ເຊໂປນ ມີຄວາມ ພາກພູມໃຈທີ່ໄດ້ຮັກສາມາດຕະຖານສາກົນ ສູງທີ່ສຸດ ແລະ ສາມາດຮັກສາມາດຕະຖານ A+ ທີ່ອອກໃຫ້ໂດຍກະຊວງພະລັງງານ ແລະ ບໍ່ແຮ່ ຢ່າງສະເໝີມາ ແລະ ເປັນທີ່ ຍອມຮັບວ່າ ໄດ້ເປັນແບບຢ່າງສໍາລັບບໍລິສັດ ບໍ່ແຮ່ອື່ນໆ ຢູ່ໃນ ສປປ ລາວ.

ປັດຈຸບັນນີ້, ບໍລິສັດ ຊື່ເຟີງ ຈີຫຼົງຂຸດຄົ້ນຄໍາ ໄດ້ຖືຫຸ້ນ 90% ໃນ LXML ທີ່ເປັນເຈົ້າຂອງ ແລະ ດໍາເນີນໂຄງການຄໍາ-ທອງ ເຊໂປນ ຢູ່ ແຂວງສະຫວັນນະເຂດ.

ນັບແຕ່ເລີ່ມດໍາເນີນງານໃນປາຍປີ 2003 ເປັນຕົ້ນມາ,LXML ໄດ້ຜະລິດແຜ່ນທອງ ຫຼາຍກວ່າ 1,1 ລ້ານ ໂຕນ ແລະ ແທ່ງ ຄໍາກວ່າ 1,5 ລ້ານ ອອນສ໌ ພ້ອມທັງໄດ້ ປະກອບສ່ວນຫຼາຍກວ່າ US$1,6 ຕື້ເປັນ ລາຍຮັບໂດຍກົງໃຫ້ແກ່ລັດຖະບານລາວ ໂດຍຜ່ານການຊໍາລະພາສີ-ອາກອນ, ຄ່າ ຊັບພະຍາກອນແຮ່ທາດ ແລະ ເງິນປັນ ຜົນ. ນອກຈາກນັ້ນ ບໍລິສັດ ກໍໄດ້ສ້າງຜົນ ປະໂຫຍດທາງອ້ອມຫຼາຍຮ້ອຍລ້ານໂດລາ ເຂົ້າໃນການສ້າງວຽກເຮັດງານທໍາ, ການຝຶກ ອົບຮົມ, ການພັດທະນາຊຸມຊົນ ແລະ ການ ສົ່ງເສີມທຸລະກິດທ້ອງຖິ່ນ.

'ບໍ່ແຮ່ໃຕ້ດິນດິສໂຄເວີຣີ-ດີບສ໌' ທີ່ຈະເປັນ ບໍ່ແຮ່ໃຕ້ດິນທີ່ທັນສະໄໝແຫ່ງທໍາອິດໃນ ສປປ ລາວ ແມ່ນພວມດໍາເນີນການກໍ່ສ້າງ ໂດຍຄາດວ່າ ຈະສາມາດຍືດອາຍຸຂອງບໍ່ ຄໍາ-ທອງ ເຊໂປນ ອອກໄປອີກຢ່າງຕໍ່າ 10 ປີ ໄປເຖິງປີ 2033. ໂຄງການຂຸດຄົ້ນບໍ່ແຮ່ ຈະ ປະກອບສ່ວນໃນການສ້າງວຽກເຮັດງານທໍາ, ການເຕີບໂຕຂອງເສດຖະກິດ ແລະ ການ ພັດທະນາແບບຍືນຍົງໃນຊຸມຊົນເຈົ້າພາບ.

ໃນປີ 2021, ໂຄງການຄໍາ-ທອງ ເຊໂປນ ໄດ້ຜະລິດທອງຫຼາຍກວ່າ 5.341 ໂຕນ ແລະ ແທ່ງຄໍາກວ່າ 192.988 ອອນສ໌. ໃນ ປີ 2022, ຄາດວ່າຈະສາມາດຜະລິດແທ່ງຄໍາ ໄດ້ 224.000 ອອນສ໌ (7 ໂຕນ) ແລະ ແຜ່ນ ທອງ 8.000 ໂຕນ.






# LXML ມອບລາຍຮັບ US$41 ລ້ານໃຫ້ແກ່ ລັດຖະບານລາວໃນປີ 2021




**20 ເມສາ 2022** - LXML ໄດ້ມອບເງິນຈຳນວນ US$5.582.907,81 ເປັນຄ່າຊັບພະຍາກອນແຮ່ທາດ ໄຕມາດທີ 4 ປີ 2021 ຈາກ ການຜະລິດ-ຈຳໜ່າຍໂລຫະຄຳ ແລະ ທອງ ລວມທັງໝົດກວ່າ US$17,24 ລ້ານ ໃນປີ 2021.

ນັບເປັນນິມິດໝາຍທີ່ດີ ທີ່ທາງຂັ້ນສູນກາງໄດ້ເລີ່ມຕົ້ນມີການກະຈາຍລາຍຮັບລົງສູ່ທ້ອງຖິ່ນ ຊຶ່ງທາງກົມຄຸ້ມຄອງຊັບສິນແຫ່ງລັດກໍໄດ້ລາຍງານໃຫ້ຊາບວ່າ ລາຍຮັບຈາກຄ່າຊັບພະຍາກອນແຮ່ທາດໃນສົກປີ 2021 ແມ່ນໄດ້ຖືກແບ່ງປັນລົງສູ່ແຂວງສະຫວັນນະເຂດປະມານ US$7,5 ລ້ານ. LXML ພາກພູມໃຈຫຼາຍທີ່ໄດ້ປະກອບສ່ວນໃຫ້ແກ່ແຂວງເຈົ້າພາບກໍຄື ແຂວງສະຫວັນນະເຂດ.

ພ້ອມດຽວກັນນີ້, ໃນວັນທີ 5 ພຶດສະພາ 2022, LXML ຕາງໜ້າໂດຍຜູ້ອຳນວຍການໃຫຍ່ ທ່ານ ສະໝານ ອະເນກາ ໄດ້ມອບອາກອນກຳໄລຈຳນວນ US$13.348.764,91 ຈາກການຜະລິດຄຳ ແລະ ທອງໃນປີ 2021.

**ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML** ໄດ້ກ່າວວ່າ: "ໃນຖານະທີ່ເປັນຄູ່ຮ່ວມງານມາຍາວນານ ແລະ ຜູ້ປະກອບສ່ວນດ້ານການເງິນລາຍໃຫຍ່ພາກສ່ວນໜຶ່ງ ໃຫ້ແກ່ ສປປ ລາວ, ພວກເຮົາກໍມີຄວາມພາກພູມໃຈທີ່ໄດ້ປະກອບສ່ວນສຳຄັນນີ້ໃຫ້ແກ່ ລັດຖະບານລາວ ໃນຂະນະທີ່ເສດຖະກິດຟື້ນຟູຈາກຜົນກະທົບຮ້າຍແຮງຂອງໂຄວິດ-19. ໂຄງການຄຳ-ທອງ ເຊໂປນ ຈະສືບຕໍ່ຂະຫຍາຍໂຕ ໃນ 10 ປີຕໍ່ໜ້າ. ໃນຖານະທີ່ເປັນກິດຈະການໜຶ່ງດຽວ ທີ່ໄດ້ຮັບການຢັ້ງຢືນລະດັບ A (+) ໃນ ສປປ ລາວ ຕະຫຼອດມາ, ໂຄງການຄຳ-ທອງ ເຊໂປນ ພວມຢູ່ໃນຂະບວນການສ້າງໂຄງການສຳຫຼວດບໍ່ແຮ່ໃຕ້ດິນທີ່ເປັນມືອາຊີບແຫ່ງທຳອິດ ແລະ ມີແຜນເປີດບໍ່ແຮ່ໃຕ້ດິນທີ່ທັນສະໄໝແຫ່ງທຳອິດໃນ ສປປ ລາວ."

**ທ່ານ ສະໝານ ອະເນກາ** ໄດ້ກ່າວຕື່ມວ່າ: "ພ້ອມດຽວກັນນີ້, LXML ຈະສືບຕໍ່ ສົ່ງເສີມທຸລະກິດທ້ອງຖິ່ນ ລວມທັງ ລັດວິສາຫະກິດໄຟຟ້າລາວ, ລັດວິສາຫະກິດນ້ຳມັນເຊື້ອໄຟລາວ, ບໍລິສັດຂົນສົ່ງສະຫວັນໂລຊິສຕິກ ແລະ ທຸລະກິດທ້ອງຖິ່ນອື່ນໆ."

ນັບຕັ້ງແຕ່ເລີ່ມມີການຂຸດຄົ້ນ-ປຸງແຕ່ງ-ຜະລິດຄຳ-ທອງ ແຕ່ປີ 2003 ເປັນຕົ້ນມາ, ທາງ LXML ໄດ້ປະກອບສ່ວນພັນທະຂອງຕົນທີ່ເປັນ ລາຍຮັບໂດຍກົງໃຫ້ແກ່ລັດຖະບານແຫ່ງ ສປປ ລາວ ເປັນເງິນທັງໝົດ ຫຼາຍກວ່າ US$1,6 ຕື້ ລວມທັງ ຄ່າຊັບພະຍາກອນແຮ່ທາດທັງໝົດຫຼາຍກວ່າ US$383 ລ້ານ ແລະ ອາກອນກຳໄລ US$827 ລ້ານ.



# ລັດຖະມົນຕີ ກຊສ ແລະ ເຈົ້າແຂວງ ສະຫວັນນະເຂດ ເປີດຂົວຂ້າມນ້ຳກອກ

**28 ມິຖຸນາ 2022** – ທ່ານນາງ ບຸນຄຳ ວໍຣະຈິດ, ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ທ່ານ ສັນຕິພາບ ພົມວິຫານ, ເຈົ້າແຂວງໆສະຫວັນນະເຂດ ໄດ້ຢ້ຽມຢາມພາກສະໜາມເຊໂປນ.

ການຢ້ຽມຢາມຄັ້ງນີ້ຂອງການນຳ ພ້ອມດ້ວຍຄະນະຈາກ ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ກະຊວງແຜນການ ແລະ ການລົງທຶນ ກໍຄື ຂະແໜງການກ່ຽວຂ້ອງຂັ້ນແຂວງ ເປັນສ່ວນໜຶ່ງຂອງ ການລົງຕິດຕາມກວດກາໂຄງການບໍ່ແຮ່ ໃນແຂວງສະຫວັນນະເຂດ ແລະ ຄຳມ່ວນ.

ໃນໄລຍະການລົງຢ້ຽມຢາມ, ການນຳ ໄດ້ເປີດຂົວຂ້າມນ້ຳກອກໃໝ່ຢ່າງເປັນທາງການ ແລະ ທັງໄດ້ກວດກາວຽກງານຂອງການອ່ວາຍແລວນ້ຳເພື່ອເອື້ອອຳນວຍກິດຈະກຳຂຸດຄົ້ນແຮ່. ຄະນະຢ້ຽມຢາມໄດ້ໃຫ້ຄຳເຫັນວ່າ ການອ່ວາຍແລວນ້ຳຂອງໂຄງການເຊໂປນຈະເປັນຕົວແບບ ແລະ ວາງມາດຕະຖານສຳລັບໂຄງການອື່ນໆໃນ ສປປ ລາວ. ຈຸດປະສົງຂອງການອ່ວາຍແລວນ້ຳ ແມ່ນເພື່ອໃຫ້ສາມາດຂຸດຄົ້ນແຮ່ຄຳ ຄຽງຄູ່ກັບຮັກສາການໄຫຼຂອງແມ່ນ້ຳ ກໍຄື ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຈາກການຂຸດຄົ້ນບໍ່ແຮ່. ລະດູຝົນ ໄດ້ສ້າງສິ່ງທ້າທາຍ ແຕ່ວຽກງານການອ່ວາຍແລວນ້ຳ ກໍຍັງສືບຕໍ່ເດີນແມ່ນແລ່ນສະດວກ.



ນອກຈາກນັ້ນ, ຄະນະກໍຍັງໄດ້ຢ້ຽມຢາມ ອຸບມົງເພື່ອເຈາະສຳຫຼວດບໍ່ໃຕ້ດິນ ດິສໂຄເວີຣີດິບສ໌ ທີ່ຈະເປັນບໍ່ໃຕ້ດິນທີ່ທັນສະໄໝແຫ່ງທຳອິດຂອງ ສປປ ລາວ. ທີມງານໂຄງການເຊໂປນ ໄດ້ນຳພາຄະນະໃນການຊົມ ອຸປະກອນຂຸດຄົ້ນບໍ່ແຮ່ໃຕ້ດິນລ້ຳໜ້າຂອງໂລກ ແລະ ເຕັກນິກການຂຸດຄົ້ນບໍ່ແຮ່ທີ່ທັນສະໄໝ ທີ່ຈະຮັບປະກັນການດຳເນີນງານຢ່າງປອດໄພຢູ່ພາກສະໜາມ.

ໃນຂະນະທີ່ສືບຕໍ່ມີການພັດທະນາໃໝ່ໆ, ໂຄງການເຊໂປນ ກໍຈະໄດ້ຕ້ອນຮັບຄະນະມາຢ້ຽມຢາມພາກສະໜາມຫຼາຍຂຶ້ນ ໃນຕໍ່ໜ້າ.


ສຽງບໍ່ຄຳເຊໂປນ | ກັນຍາ 2022




# LXML ສະໜັບສະໜູນການປັບປຸງ-ຍົກລະດັບເສັ້ນທາງ 28A

**5 ເມສາ 2022** – ອຳນາດການປົກຄອງແຂວງສະຫວັນນະເຂດ ແລະ LXML ໄດ້ມີການລົງນາມໃນບົດບັນທຶກຄວາມເຂົ້າໃຈ (MoU) ເພື່ອຍົກລະດັບເສັ້ນທາງຂອງລັດ ເລກທີ 28A ໂດຍການປູຢາງສອງຊັ້ນ ມີຄວາມຍາວ 41,56 ກິໂລແມັດ ແຕ່ບ້ານນາບໍ່ ຫາ ເມືອງວິລະບູລີ. ໂຄງການຍົກລະດັບເສັ້ນທາງດັ່ງກ່າວນີ້ ຈະສະໜອງການເຂົ້າເຖິງເສັ້ນທາງໃຫ້ແກ່ ຄົນທ້ອງຖິ່ນຈາກເມືອງວິລະບູລີ ຫຼາຍກວ່າ 40 000 ຄົນ.

LXML ຈະປະກອບສ່ວນ US$5 ລ້ານ ຈາກກອງທຶນຟື້ນຟູສະພາບແວດລ້ອມ ແລະ ສັງຄົມຂອງບໍລິສັດ ເພື່ອປັບປຸງ-ຍົກລະດັບເສັ້ນທາງ 28A.

ເປັນກຽດລົງນາມໃນ MoU ຄັ້ງນີ້ມີ ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML ແລະ ທ່ານ ວາລີຍະ ສີຈັນທອງທິບ, ຫົວໜ້າພະແນກແຜນການ ແລະ ການລົງທຶນ ແຂວງສະຫວັນນະເຂດ ໂດຍການເປັນສັກຂີພະຍານຂອງ ທ່ານ ວຽງທະວີສອນ ເທບພະຈັນ, ຮອງເຈົ້າແຂວງສະຫວັນະເຂດ, ພະແນກການອ້ອມຂ້າງແຂວງ, ພ້ອມດ້ວຍອະດີດການນຳຂອງແຂວງ, ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ຜູ້ຕາງໜ້າອົງການຈັດຕັ້ງມະຫາຊົນ, ອຳນາດການປົກຄອງເມືອງວິລະບູລີ, ທີ່ປຶກສາ ແລະ ພະນັກງານ LXML.

**ທ່ານ ສະໝານ ອະເນກາ** ໄດ້ກ່າວວ່າ: "ຂ້າພະເຈົ້າມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ ໂຄງການນີ້ ແລະ ການຮ່ວມມືທີ່ດີສະເໝີມາ ກັບແຂວງສະຫວັນນະເຂດ ຈະຮັບປະກັນໃຫ້ປະຊາຊົນສາມາດເດີນທາງຢ່າງປອດໄພ ແລະ ນຳເອົາສິນຄ້າຕົນເຂົ້າເຖິງຕະຫຼາດ. ການລົງທຶນໃໝ່ນີ້ຈະຮັບປະກັນຊີວິດການເປັນຢູ່ທີ່ດີຂຶ້ນສຳລັບຄົນທ້ອງຖິ່ນ ຈາກ ກິດຈະກຳດ້ານກະສິກຳ, ການທ່ອງທ່ຽວ ແລະ ເສດຖະກິດທີ່ຍືນຍົງພາຍຫຼັງທີ່ບໍ່ຄຳ-ທອງ ເຊໂປນ ປິດລົງໃນອະນາຄົດ."



ກ່ອນປີ 2000 ເມືອງວິລະບູລີ ຍັງຖືວ່າເປັນເຂດຊົນນະບົດຫ່າງໄກສອກຫຼີກ ເສັ້ນທາງດິນດັ້ງເດີມ ແມ່ນຄັບແຄບ ແລະ ມີນ້ຳຖ້ວມໃນລະດູຝົນ ເຮັດໃຫ້ທາງເລືອກໃນການຂົນສົ່ງມີຄວາມຈຳກັດ. ເສັ້ນທາງກໍເປັນບວກເປັນຕົມ ທີ່ຫຍຸ້ງຍາກລຳບາກທີ່ສຸດ. ການເດີນທາງດ້ວຍລົດ ຈາກບ້ານ ນາບໍ່ ຫາ ເມືອງວິລະບູລີ ແມ່ນໃຊ້ເວລາຢ່າງຕ່ຳ ເປັນ 2 ມື້ ຈຶ່ງຮອດ. ນອກຈາກນັ້ນ, ເມືອງວິລະບູລີ ກໍເປັນເຂດທີ່ໄດ້ມີການຖິ້ມລະເບີດຢ່າງຫຼວງຫຼາຍ ແລະ ຜົນກະທົບທີ່ຕາມມາຈາກລະເບີດຝັງດິນທີ່ບໍ່ທັນແຕກ ກໍເປັນອັນຕະລາຍຢ່າງມະຫາສານ.

ມາຮອດປັດຈຸບັນ, ທຸກໆບ້ານຢູ່ໃນເມືອງວິລະບູລີ ແມ່ນມີເສັ້ນທາງເຂົ້າເຖິງ. ນັບຕັ້ງແຕ່ເລີ່ມການດຳເນີນການຂຸດຄົ້ນ-ຜະລິດຄຳ-ທອງ ໃນປີ 2003 ເປັນຕົ້ນມາ, LXML ໄດ້ລົງທຶນປະມານ US$20 ລ້ານ ເພື່ອກໍ່ສ້າງ ແລະ ບຳລຸງຮັກສາເສັ້ນທາງທ້ອງຖິ່ນ ພາຍໃນເມືອງລວມທັງເສັ້ນທາງ 28A.




# ແມ່ຍິງໃນຂະແໜງຂຸດຄົ້ນບໍ່ແຮ່

ຂຽນໂດຍ: ທີມງານການດຳເນີນງານທີ່ດີເລີດດ້ານການຂຸດຄົ້ນບໍ່ແຮ່

ການຖືອາຊີບເປັນວິສາວະກອນ ບໍ່ແມ່ນວ່າທຸກຄົນຈະເປັນໄດ້. ວິສະວະກຳ ຮຽກຮ້ອງໃຫ້ມີການອຸທິດເຫື່ອແຮງໃນການວິເຄາະທີ່ນຳໄປສູ່ການແກ້ໄຂບັນຫາ, ເຊິ່ງ ເວົ້າລວມເປັນຂະແໜງໜ້າວຽກທີ່ມີຄວາມທ້າທາຍຢູ່ແລ້ວ. ແຕ່ວ່າ, ແມ່ຍິງທີ່ເຮັດວຽກໃນຂະແໜງວິສະວະກຳ ແລະ ເວົ້າສະເພາະອຸດສາຫະກຳບໍ່ແຮ່ນີ້ ຍິ່ງພົບກັບຄວາມທ້າທາຍໄປຕື່ມອີກ ຄື: ການຈຳແນກ-ແນວຄິດຕາຍຕົວ ທີ່ຖ່ວງດຶງພວກເຮົາທຸກຄົນ.

ຄວາມຫຼາກຫຼາຍມີຄວາມສຳຄັນສຳລັບທຸກໆສັງຄົມ ແລະ ການໄດ້ເປັນສ່ວນໜຶ່ງຂອງ "ທີມງານການດຳເນີນງານທີ່ດີເລີດດ້ານການຂຸດຄົ້ນບໍ່ແຮ່" ກໍເປັນແຮງບັນດານໃຈໜຶ່ງໃນການເຮັດວຽກ ຍ້ອນວ່າ ທີມງານນີ້ ບໍ່ມີການຈຳແນກລະຫວ່າງ ແມ່ຍິງ ແລະ ຜູ້ຊາຍ. ພວກເຮົາມີໂອກາດໄດ້ພິສູດ ທ່າແຮງບົ່ມຊ້ອນ ແລະ ຄວາມສາມາດ ໃນບົດບາດໜ້າທີ່ ເຊິ່ງໂດຍປົກກະຕິທົ່ວໄປ ຈະແມ່ນຜູ້ຊາຍເປັນຜູ້ຖື. ບົດບາດໜ້າທີ່ຂອງພວກເຮົາ ໃນໜ່ວຍງານດຳເນີນງານຄວາມດີເລີດດ້ານການຂຸດຄົ້ນບໍ່ແຮ່ ໄດ້ໃຫ້ໂອກາດພວກເຮົານຳໃຊ້ຄວາມຮູ້ດ້ານເຕັກນິກເຂົ້າໃນໜ້າວຽກຈາກຜຽນໜຶ່ງສູ່ອີກ ຜຽນໜຶ່ງສືບເນື່ອງໄປທັງເວັນ ແລະ ຄືນຄຽງຄູ່ກັບ ໂອກາດໃຫ້ພວກເຮົາໄດ້ພັດທະນະຕົນເອງ ແລະ ທີມງານ.

ຂະແໜງການບໍ່ແຮ່ເປັນວຽກທີ່ຍາກທ້າທາຍ ແຕ່ເຮັດແລ້ວກໍມ່ວນ ແລະ ມີຄວາມພາກພູມໃຈ. ມັນເປັນໜ້າວຽກທີ່ມີຄວາມຫຼາກຫຼາຍ ແລະ ມີຄວາມທ້າທາຍຢູ່ສະເໝີ. ພວກເຮົາເປັນສ່ວນໜຶ່ງຂອງທີມງານທີ່ເຮັດວຽກໃຫ້ປະກົດຜົນເປັນຈິງ ແລະ ມີໂອກາດຂັບເຄື່ອນຫຼາຍກວ່າການຜະລິດຄຳ-ທອງຄື: ພວກເຮົາສາມາດປະກອບສ່ວນຕໍ່ຜົນຮັບທີ່ສຳຄັນ ຜ່ານການເຮັດວຽກດ້ວຍຄວາມຂະຫຍັນພາກພຽນ, ການອຸທິດເຫື່ອແຮງ ແລະ ຄວາມມັກຮັກໃນໜ້າວຽກ. ສິ່ງເຫຼົ່ານີ້ລ້ວນແຕ່ເປັນແຮງຈູງໃຈ ແລະ ພະລະກຳລັງໃຫ້ພວກເຮົາມີຄວາມອົດທົນໃນແຕ່ລະວັນ.

ພວກເຮົາຊຸກຍູ້ໃຫ້ແມ່ຍິງລາວທຸກຄົນ ຈົ່ງເຂັ້ມແຂງ ແລະ ສານຕໍ່ຕາມຄວາມຝັນຂອງຕົນ ບໍ່ວ່າຈະມີສິ່ງທ້າທາຍ ຫຼື ການຈຳແນກ-ແນວຄິດຕາຍຕົວໃດໆ. ພວກເຮົາ, ແມ່ຍິງ, ຈະຜ່ານຜ່າທຸກໆບັນຫາ ແລະ ຄວາມຫຍຸ້ງຍາກທີ່ຜ່ານມາໃນຊີວິດພວກເຮົາ.

ໃນວັນແມ່ຍິງສາກົນປີນີ້, ພວກເຮົາຮ້ອງຂໍໃຫ້ເພື່ອນຮ່ວມງານທຸກຄົນປ່ອຍປະການຈຳແນກ-ແນວຄິດຕາຍຕົວໄວ້ເບື້ອງຫຼັງ ແລະ ຊ່ວຍອູ້ມຊູສັນລະເສີນກັນ ແລະ ກັນ ບໍ່ວ່າທ່ານຈະແມ່ນເພດໃດ. ພວກເຮົາຕ້ອງປ່ຽນແນວຄິດ: ອັນໃດທີ່ຜູ້ຊາຍເຮັດໄດ້ ແມ່ຍິງກໍເຮັດໄດ້ ໂດຍສະເພາະ ໃນຂະແໜງວິສະວະກຳ ແລະ ບໍ່ແຮ່ ເພາະ ພວກເຮົາບໍ່ແມ່ນວິສະວະກອນຍິງ, ແຕ່ພວກເຮົາແມ່ນ "ວິສະວະກອນ".



# ການສະເຫຼີມສະຫຼອງວັນວິສະວະກອນແມ່ຍິງສາກົນ

ຢູ່ LXML, ພວກເຮົາຮັບຮູ້ເຖິງປະສົບການ ແລະ ຄວາມພະຍາຍາມ ຂອງແມ່ຍິງທຸກຄົນ ໃນອຸດສາຫະກຳບໍ່ແຮ່, ວິສະວະກຳ ແລະ ໂອກາດໃນການເຮັດວຽກທີ່ຫຼາກຫຼາຍໃນອຸດສະຫະກຳທີ່ໜ້າຕື່ນເຕັ້ນນີ້.




ວັນວິສະວະກອນແມ່ຍິງສາກົນ (INWED) ບັນຈົບຄົບຮອບປີທີ 9 ໃນວັນທີ 23 ມິຖຸນາ 2022 ຜ່ານມາ, ເຊິ່ງເປັນໂອກາດຍົກສູງບົດບາດຂອງວິສະວະກອນແມ່ຍິງ ທີ່ຖືວ່າຍັງມີຈຳນວນໜ້ອຍຢູ່ທີ່ຖືອາຊີບນີ້. ຮອດເດືອນມິຖຸນາ 2021, ມີພຽງ 16,5% ທີ່ເປັນວິສະວະກອນແມ່ຍິງ. ພວກເຮົາຄວນຊຸກຍູ້ແມ່ຍິງ ແລະ ເດັກຍິງ ໃຫ້ຫັນມາຮຽນ ແລະ ເຮັດອາຊີບໃນຂະແໜງວິສະວະກຳ ພ້ອມທັງ ສະເຫຼີມສະຫຼອງພົນງານທີ່ພົ້ນເດັ່ນຂອງວິສະວະກອນແມ່ຍິງ ໃນທົ່ວໂລກ.

ປີນີ້ ຄຳຂວັນຂອງວັນ ວິສະວະກອນແມ່ຍິງສາກົນແມ່ນ *"ນັກປະດິດ & ຜູ້ປະດິດສ້າງ", ເພື່ອກ້າວສູ່ອະນາຄົດ ແລະ ສຸມໃສ່ການປະກອບສ່ວນຂອງນັກປະດິດ ແລະ ຜູ້ປະດິດສ້າງທີ່ຈະປ່ຽນແປງອຸດສາຫະກຳຕ່າງໆໄປໃນທາງທີ່ດີຂຶ້ນກວ່າເກົ່າ."*

# ການຍົກລະດັບຄວາມສາມາດດ້ານບໍ່ແຮ່ສູ່ລະດັບສາກົນຂອງບໍລິສັດ ຊີເຟິງຂຸດຄົ້ນຄຳ




**1 ກໍລະກົດ 2022** – ສະມາຊິກໃນທີມງານຜູ້ບໍລິຫານຂອງຊີເຟິງ ທີ່ຖືກຄັດເລືອກໄດ້ກ້າວສູ່ໄລຍະທີສອງຂອງ ຫຼັກສູດຝຶກອົບຮົມຍົກລະດັບຄວາມສາມາດດ້ານບໍ່ແຮ່ສູ່ລະດັບສາກົນ ທີ່ແນໃສ່ຍົກສູງຄວາມເປັນມືອາຊີບ ແລະ ທັກສະດ້ານພາສາອັງກິດທີ່ກ່ຽວຂ້ອງກັບອຸດສາຫະກຳບໍ່ແຮ່. ຜູ້ເຂົ້າຮ່ວມໄດ້ຮັບຟັງກ່ຽວກັບວັດທະນະທຳລາວ ແລະ ໄດ້ສືບຕໍ່ຮຽນຢ່າງຊຸ້ນຊ້ຽວ ໄປຮອດກາງເດືອນສິງຫາ ໃນຫົວຂໍ້ກ່ຽວກັບ LXML ແລະ ສປປ ລາວ ກ່ອນການມາຢ້ຽມຢາມພາກສະໜາມໃນເດືອນພະຈິກ.

**ທ່ານ ຫວາງ ຈຸ້ງນຫົວ, ປະທານ ຊີເຟິງ** ກ່າວວ່າ: "ຂ້າພະເຈົ້າຂໍຊຸກຍູ້ໃຫ້ຜູ້ເຂົ້າຮ່ວມມີວິໄສທັດທີ່ເປັນສາກົນຍິ່ງຂຶ້ນ, ຮຽນຮູ້ພາສາທີ່ຕິດພັນກັບອາຊີບເຮົາ ແລະ ເຕັກໂນໂລຊີ ໃຫ້ໄດ້ຫຼາຍຂຶ້ນ ແລະ ເປີດກວ້າງຮັບເອົາແນວຄິດທັດສະນະຄະຕິໃໝ່ໆ. ພວກເຮົາຕ້ອງການຝຶກພະນັກງານໃຫ້ກ້າວສູ່ 'ລະດັບໂລກ'."

ນັບແຕ່ເດືອນມີນາ ຫາ ມິຖຸນາ 2022, ຜູ້ເຂົ້າຮ່ວມຝຶກອົບຮົມໄດ້ຜ່ານການສຶກສາດ້ວຍຕົນເອງທາງອອນໄລນ໌ ສະເລ່ຍ 60 ຊົ່ວໂມງໃນໄລຍະທຳອິດຂອງຫຼັກສູດ. ຜົນການຮຽນຮູ້ແມ່ນຖືວ່າລື່ນຄາດໝາຍ ແລະ ທັກສະດ້ານພາສາກໍໄດ້ປັບປຸງຢ່າງວ່ອງໄວ.

ໄລຍະທີສອງຂອງຫຼັກສູດຝຶກອົບຮົມແມ່ນຈະມີ ພະນັກງານຫຼັກໆຈາກພະແນກທີ່ກ່ຽວຂ້ອງ ແລະ ຄູທີ່ຈ້າງຈາກພາຍນອກ ເພື່ອສອນພາສາອັງກິດ ເຊິ່ງເປັນພື້ນຖານສຳຄັນ ສຳລັບໄລຍະຕໍ່ໄປຂອງການແລກປ່ຽນບົດຮຽນຢູ່ ສປປ ລາວ.



# ລາງວັນຜົນງານທີ່ພົ້ນເດັ່ນປະຈຳປີ 2021 ຂອງ ບໍລິສັດ ຊີເຟິງ

ໃນກອງປະຊຸມປະຈຳປີ ຂອງບໍລິສັດ ຊີເຟິງ ຄັ້ງວັນທີ 22 ມັງກອນ 2022, ຄະນະສະພາຜູ້ບໍລິຫານຂອງບໍລິສັດ ຊີເຟິງ ໄດ້ປະກາດ ລາງວັນຜົນງານທີ່ພົ້ນເດັ່ນ ແລະ ດີເລີດ ຈຳນວນໜຶ່ງ.

LXML ໄດ້ຮັບການຄັດເລືອກ ຮັບລາງວັນ ບໍລິສັດເຄືອຂ່າຍທີ່ມີຜົນງານພົ້ນເດັ່ນ. ບໍລິສັດຊີເຟິງ ໄດ້ຮັບຮູ້ 10 ທີມງານທີ່ພົ້ນເດັ່ນຂອງ LXML ທີ່ໄດ້ປະກອບສ່ວນໃນການບັນລຸເປົ້າໝາຍຍຸດທະສາດຂອງບໍລິສັດ. ທີມງານດັ່ງກ່າວລວມມີ ພະແນກບຳລຸງຮັກສາໂຮງງານ, ທີມງານການແພດ, ທີມງານສິ່ງແວດລ້ອມ, ທີມງານອ່າງນໍ້າຫາງແຮ່, ທີມງານພັດທະນາເຂດບໍ່ແຮ່, ທີມງານ UXO GIS, ທີມງານໂຮງງານອົກຊີແຊນ, ທີມງານຈັດສັນການເດີນທາງ ແລະ ບໍລິຫານ, ທີມງານຈັດຫາບຸກຄະລາກອນ, ແລະ ພະແນກພົວພັນກັບຜູ້ມີສ່ວນຮ່ວມ.

ຂໍສະແດງຄວາມຍ້ອງຍໍຊົມເຊີຍແດ່ພະນັກງານ ແລະ ທີມງານຂອງ LXML ທຸກຄົນ ໃນຄວາມພະຍາຍາມ ແລະ ການປະກອບສ່ວນອັນພົ້ນເດັ່ນໃນຕະຫຼອດປີ 2021. ຈົ່ງສືບຕໍ່ປະກອບສ່ວນຢ່າງຫ້າວຫັນ ເພື່ອບັນລຸເປົ້າໝາຍໃນປີ 2022 ນີ້.


ທີມງານພັດທະນາເຂດບໍ່ແຮ


ທີມງານອ່າງນໍ້າຫາງແຮ່


ທີມງານ UXO GIS


ທີມງານໂຮງງານອົກຊີເຈັນ


ທີມງານສິ່ງແວດລ້ອມ


ທີມງານການແພດ




ທີມງານພົວພັນກັບຜູ້ມີສ່ວນຮ່ວມ

# ໂຄງການນັກຮຽນຊ່າງເຕັກນິກ

## ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ



& ***ນັກຮຽນຊ່າງເຕັກນິກແມ່ນຫຍັງ?*** ແມ່ນການປະສົມປະສານລະຫວ່າງການຝຶກອົບຮົມເຕັກນິກວິຊາຊີບ, ການປະຕິບັດງານຕົວຈິງໃນພາກສະໜາມ ແລະ ປະສົບການໃນການເຮັດວຽກ!

& ***ໂຄງການນີ້ອອກແບບມາ*** ເພື່ອໃຫ້ນັກສຶກສາໃນຊຸມຊົນທ້ອງຖິ່ນ ໄດ້ເຂົ້າເຖິງການສຶກສາດ້ານເຕັກນິກວິຊາຊີບ

& ***ສົກຮຽນ ປີ 2022 - 2024***

***ໃນຂະແໜງ:***

- ກົນຈັກໜັກ
- ລົດຍົນ
- ກົນຈັກ
- ໄຟຟ້າ
- ຄວບຄຸມລົດເຄຣນ - ເຄື່ອງຍົກໃນອຸດສາຫະກຳ

➲ ຜູ້ທີ່ໄດ້ຮັບຄັດເລືອກເຂົ້າມາໃນໂຄງການນີ້ ຕ້ອງໄດ້ເຊັນສັນຍາ 4 ປີ! ຊຶ່ງໝາຍຄວາມວ່າ ຕ້ອງໄດ້ເປັນນັກຮຽນຝຶກຫັດ 2 ປີ ແລະ ສືບຕໍ່ເຮັດວຽກກັບບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ ອີກ 2 ປີ.

➲ ນັບແຕ່ປີ 1 ຫາປີ 2, ຈະໄດ້ຝຶກອົບຮົມໃຫ້ເປັນຊ່າງເຕັກນິກ ວິຊາການໃດໜຶ່ງ ແລະ ຮຽນຮູ້ລະບົບຄວາມປອດໄພໃນອຸດສາຫະກຳ!, ນອກນັ້ນ ຍັງຈະມີໂອກາດໃນການຝຶກອົບຮົມພາສາອັງກິດອີກດ້ວຍ.

➲ ໂຄງການນີ້ ໄດ້ຮັບທຶນສະໜັບສະໜູນຈາກບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ100%!

➲ ທາງບໍລິສັດ ຈະສະໜອງທີ່ພັກ, ເງິນເດືອນພື້ນຖານ, ການເດີນທາງ ແລະ ປະກັນສຸຂະພາບ ຕະຫຼອດໄລຍະໂຄງການ,

➲ ໃບປະກາດສະນີຍະບັດດ້ານວິຊາຊີບຂອງທ່ານຈະຖືກຢັ້ງຢືນ ແລະ ຮັບຮອງໂດຍໂຮງຮຽນເຕັກນິກວິຊາຊີບ ແລະ ກະຊວງສຶກສາທິການ!

### ຂັ້ນຕອນໃນການຄັດເລືອກ

| ຍື່ນໃບສະໝັກ (ກ່ອນ 10 ສິງຫາ) | ເສັງຄັດເລືອກ (11-13 ສິງຫາ) | ສຳພາດ (14-15 ສິງຫາ) | ກວດສຸຂະພາບ (ກ່ອນ 19 ສິງຫາ) | ປະກາດຜູ້ສະໝັກທີ່ຜ່ານການຄັດເລືອກ (20 ສິງຫາ) |
|---|---|---|---|---|

ທ່ານສາມາດເອົາແບບຟອມສະໝັກຈາກທີມງານບຸກຄະລາກອນ ຫຼື ພົວພັນທ້ອງຖິ່ນ ຫຼື ສະແກນຄິວອາ.

ເບີຕິດຕໍ່: 02022213354, 02022232839, 02022216892, 02022213695

ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ
万象矿业有限公司
CHIFENG LXML SEPON






# LXML ຝຶກອົບຮົມ ຊ່າງສີມືແຮງງານລາວ



**18 ສິງຫາ 2022** - LXML ແລະ ວິທະຍາໄລເຕັກນິກລາວ-ເຢຍລະມັນ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ ໂຄງການຝຶກອົບຮົມນັກສຶກສາຊ່າງສີມື ເພື່ອສະໜອງທຶນການສຶກສາດ້ານເຕັກນິກໃຫ້ແກ່ຊຸມຊົນທ້ອງຖິ່ນອ້ອມຂ້າງບໍ່ຄຳ-ທອງເຊໂປນ ໃນເມືອງວິລະບູລີ.

ນັກສຶກສາຊ່າງສີມື ທີ່ໄດ້ຮັບການຄັດເລືອກສຳລັບໂຄງການ ຈະໄດ້ຮັບການຝຶກອົບຮົມວິຊາຊີບໃນຂະແໜງເຕັກໂນໂລຊີລົດຍົນ, ໄຟຟ້າເອເລັກໂຕຣນິກ, ຈັກກົນໂຮງງານ, ກົນຈັກໜັກ ແລະ ໂລຫະກຳວິທະຍາ.

ໂຄງການນີ້ຈະຈັດຕັ້ງປະຕິບັດນັບຕັ້ງແຕ່ປີ 2022 ແລະ ສິ້ນສຸດໃນປີ 2026. ລະຫວ່າງປີ 2015 ແລະ 2018, ນັກສຶກສາຊ່າງສີມື ຈຳນວນ 18 ຄົນ ໄດ້ສຳເລັດຫຼັກສູດ 5 ປີ ຮັບໃບປະກາສະນີຍະບັດຂັ້ນ III ຂອງປະເທດອົດສະຕຣາລີ ແລະ ເຕັກນິກວິຊາຊີບຊັ້ນສູງຂອງລາວ, ຜູ້ສຳເລັດຫຼັກສູດໄດ້ຮັບທັກສະທີ່ມີຄຸນຄ່າ ເພື່ອປະກອບສ່ວນໃນການພັດທະນາ ສປປ ລາວ.

**ທ່ານ ສະໝານ ອະເນກາ**, ຜູ້ອຳນວຍການໃຫຍ່ LXML ໄດ້ ລົງນາມໃນບົດບັນທຶກຄວາມເຂົ້າໃຈຮ່ວມກັບ ທ່ານ ຄຳສະໄຫວ ຍອມມີລາວົງ ຜູ້ອຳນວຍການວິທະຍາໄລເຕັກນິກລາວ-ເຢຍລະມັນ ໂດຍການໃຫ້ກຽດເປັນສັກຂີພິຍານໂດຍ ທ່ານ ໜູພັນ ອຸດສາ ຫົວໜ້າກົມອາຊີວະສຶກສາ, ກະຊວງສຶກສາທິການ ແລະ ກິລາ.

**ທ່ານ ສະໝານ ອະເນກາ** ກ່າວວ່າ: "ຂ້າພະເຈົ້າມີຄວາມພາກພູມໃຈໃນການປະກອບສ່ວນຂອງ LXML ໃສ່ການຝຶກອົບຮົມ ແລະ ການພັດທະນາເພື່ອສ້າງຊີວິດການເປັນຢູ່ທີ່ດີຂຶ້ນຂອງຄົນຮຸ່ນໃໝ່."

ທ່ານ ກ່າວຕື່ມອີກວ່າ "ທັກສະ ແລະ ປະສົບການທີ່ນັກສຶກສາໄດ້ຮັບ ຈະປະກອບສ່ວນໃນການດຳເນີນງານຂອງບໍ່ຄຳ-ທອງເຊໂປນ ແລະ ປະກອບສ່ວນໃສ່ການພັດທະນາ ສປປ ລາວ."

ນັບຕັ້ງແຕ່ເລີ່ມດຳເນີນງານໃນປີ 2003, LXML ໄດ້ລົງທຶນຫຼາຍລ້ານໂດລາສະຫະລັດ ໃສ່ການຝຶກອົບຮົມ, ໃຫ້ທຶນການສຶກສາ, ຊ່າງສີມື, ນັກຮຽນ ແລະ ນັກສຶກສາຝຶກງານ. ນັກສຶກສາຫຼາຍກວ່າ 105 ຄົນ ສຳເລັດການສຶກສາຈາກໂຄງການນັກສຶກສາຊ່າງສີມື ແລະ 36 ຄົນ ສຳເລັດການສຶກສາລະດັບອາຊີບຈາກຕ່າງປະເທດດ້ວຍທຶນການສຶກສາຂັ້ນສູງ.

ມາຮອດເດືອນມິຖຸນາ 2022, LXML ໄດ້ສະໜອງການຝຶກອົບຮົມໃຫ້ແກ່ພະນັກງານລາວກວ່າ 23.000 ຊົ່ວໂມງ ດ້ວຍການຝຶກອົບຮົມພາຍໃນ, ພາຍນອກ, ໃນໜ້າວຽກ ແລະ ຢູ່ຕ່າງປະເທດ. ໃນທ້າຍເຄິ່ງປີ 2022, LXML ຈະຟື້ນຟູຫຼັກສູດທີ່ເປັນທີ່ນິຍົມຄື ໂຄງການພັດທະນາຫົວໜ້າຄຸມງານ ແລະ ການເປັນຜູ້ນຳເພື່ອສະໜັບສະໜູນນັກວິຊາການຂຸດຄົ້ນແຮ່ມືອາຊີບຮຸ່ນໃໝ່ຂອງ ສປປ ລາວ.

LXML ເປັນບໍລິສັດດຳເນີນການຂຸດຄົ້ນແຮ່ ໜຶ່ງດຽວໃນ ສປປ ລາວ ທີ່ໄດ້ຮັບການຈັດອັນດັບປະເພດ A+ ຢ່າງຕໍ່ເນື່ອງ ທີ່ອອກໃຫ້ໂດຍກະຊວງພະລັງງານ ແລະ ບໍ່ແຮ່ ສຳລັບຄວາມມຸ່ງໝັ້ນຂອງບໍລິສັດໃນການປະກອບສ່ວນຕໍ່ການພັດທະນາເສດຖະກິດ ແລະ ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ, ການປົກປັກຮັກສາສິ່ງແວດລ້ອມ ແລະ ການຮັກສາມາດຕະຖານການດຳເນີນງານໃນລະດັບສາກົນ.

ນັບຕັ້ງແຕ່ເລີ່ມການຜະລິດໃນປີ 2003, ບໍ່ຄຳ-ທອງເຊໂປນ ປະກອບສ່ວນເປັນລາຍຮັບໂດຍກົງໃຫ້ແກ່ລັດຖະບານລາວກວ່າ US$1,6 ຕື້ ຈາກ ການຈ່າຍພາສີອາກອນ, ຄ່າຊັບພະຍາກອນແຮ່ທາດ ແລະ ເງິນປັນຜົນ. ນອກຈາກນັ້ນຍັງປະກອບສ່ວນຫຼາຍຮ້ອຍລ້ານໂດລາສະຫະລັດ ຈາກການສ້າງວຽກເຮັດງານທຳ, ການຝຶກອົບຮົມ, ການພັດທະນາຊຸມຊົນ ແລະ ທຸລະກິດທ້ອງຖິ່ນ. ບໍ່ຄຳ-ທອງເຊໂປນ ສ້າງວຽກເຮັດງານທຳໃຫ້ແກ່ຄົນທ້ອງຖິ່ນຫຼາຍກວ່າ 5000 ຄົນ.

# ຈະຢຸດຜັດວັນປະກັນພຸ່ງ ແນວໃດ?

*ຄັດຈາກ ວາລະສານ Harvard Business Review, ພຶດສະພາ-ມິຖຸນາ 2022*

***ຍາມໃດຍາມໃດທ່ານກໍຜັດວັນປະກັນພຸ່ງຢູ່ເລື້ອຍໆບໍ່? ຄົນເຮົາສ່ວນໃຫຍ່ຜັດວັນປະກັນພຸ່ງ ແລ້ວກໍຮູ້ສຶກຜິດ ແລະ ຕຳນິໂຕເອງ. ແຕ່ສຸດທ້າຍກໍຍັງຜັດວັນປະກັນພຸ່ງຢູ່ຄືເກົ່າ. ຍ້ອນຫຍັງ? ຍ້ອນ 3 ປັດໄຈຄື:***

- ຄວາມລຶ້ງເຄີຍ-ເປັນນິດໄສ ແລະ ລະບົບການບໍລິຫານຕົນເອງ ຫຼື ຂາດລະບົບການບໍລິຫານຕົນເອງ (ຂາດວິໄນ).
- ຄວາມຕ້ອງການຂອງທ່ານເພື່ອຫຼີກລ່ຽງຄວາມຮູ້ສຶກດ້ານລົບເຊັ່ນ ຄວາມກັງວົນ ແລະ ຄວາມເບື່ອໜ່າຍ
- ວິທີການຄິດທີ່ບົກຜ່ອງຂອງທ່ານ ເຊິ່ງ ຈະເຮັດໃຫ້ໜ້າວຽກໃດໜຶ່ງຫຍຸ້ງຍາກກວ່າຄວາມເປັນຈິງ.

***ໂຊກດີຢູ່ ທີ່ຍັງມີຍຸດທະສາດງ່າຍໆ ເພື່ອຈັດການແຕ່ລະປັດໄຈ. ເພື່ອສ້າງຄວາມລຶ້ງເຄີຍ-ນິດໄສທີ່ດີ:***

- ເຮັດວຽກທີ່ສຳຄັນຢ່າງສະໝ່ຳສະເໝີໃນແຕ່ລະວັນ: ຫຼັງຈາກທີ່ຂ້ອຍເຮັດວຽກນີ້, ຂ້ອຍຈະເຮັດວຽກທີ່ຕ້ອງການສະມະທິ-ລາຍລະອຽດ (ໂຄງການໄລຍະຍາວທີ່ສຳຄັນທີ່ສຸດ). ວຽກດັ່ງກ່າວ ນີ້ສ່ວນໃຫຍ່ຈະເປັນວຽກທີ່ທ້າທາຍ ແຕ່ການເຮັດຢ່າງສະໝ່ຳສະໝີໃນແຕ່ລະວັນຈະຫລຸດຄວາມທ້າທາຍລົງ.
- ວາງລະບົບສຳລັບການເລີ່ມໜ້າວຽກໃໝ່ອີງໃສ່ໜ້າວຽກຜ່ານມາທີ່ທ່ານເຮັດໄດ້ດີເພື່ອໃຫ້ໜ້າວຽກຕໍ່ໆໄປດຳເນີນໄປໂດຍດີ.
- ເມື່ອໜ້າວຽກໃດເຮັດໃຫ້ທ່ານກັງວົນ,ຈົ່ງເລີ່ມຈາກຂັ້ນຕອນທີ່ງ່າຍທີ່ສຸດແລ້ວຈຶ່ງຄ່ອຍໆກ້າວຂຶ້ນຕາມລຳດັບ. ກະຕຸ້ນຕົນເອງດ້ວຍການເຮັດວຽກທີ່ໜ້າເບື່ອກ່ອນແລ້ວໃຫ້ລາງວັນຕົນເອງເມື່ອສຳເລັດ.
- ຖ້າທ່ານຄິດຫຍັງບໍ່ອອກ, ໃຫ້ລອງຄິດເບິ່ງວ່າອັນໃດຈະເຮັດໃຫ້ວຽກນັ້ນເປັນໄປບໍ່ໄດ້ ແລ້ວໃນທາງກັບກັນ ໃຫ້ລະບຸອັນໃດທີ່ຈະເຮັດໃຫ້ເປັນໄປໄດ້.



ໜ້າວຽກໃໝ່ສ່ວນໃຫຍ່ກໍອາດຝືດ. ທ່ານ ຕ້ອງຮັບຮູ້ວ່າເຖິງຈະມີຄວາມເຄັ່ງຕຶງ-ຄວາມກົດດັນ ແຕ່ກໍບໍ່ໄດ້ໝາຍຄວາມວ່າວຽກຂອງທ່ານບໍ່ມີຄວາມຄືບໜ້າ. ແລະ ຖ້າທ່ານຮູ້ສຶກວ່າວຽກໃດມັນໃຫຍ່ ມັນຫຼາຍເກີນໄປທ່ານກໍຄວນເຮັດໄປເທື່ອລະໜ້ອຍເປັນກ້າວໆໄປ.







# LXML ສະໜັບສະໜູນການຫຼອມ ແລະ ງານສົມໂພດພຣະພຸດທະຮູບໃຫຍ່ອົງຕື້ ອຸດຕະມະໂຊກ ຢູ່ ແຂວງສະຫວັນນະເຂດ

**ໃນເດືອນ ກຸມພາ 2022 -** ບໍ່ຄຳ-ທອງເຊໂປນ ໄດ້ເປັນເຈົ້າພາບເຈົ້າສັດທາສ້າງ ແລະ ຈັດງານພຸດທະພິເສກສົມໂພດ ພຣະພຸດທະຮູບພຣະໃຫຍ່ອົງຕື້ ອຸດຕະມະໂຊກ ຢູ່ ເມືອງວິລະບູລີ, ແຂວງສະຫວັນນະເຂດ.

ກອງທຶນພັດທະນາຊຸມຊົນຂອງ LXML ໄດ້ສະໜັບສະໜູນການສ້າງ ພຣະພຸດທະຮູບພຣະໃຫຍ່ອົງຕື້ (ຂະໜາດໜ້າຕັກ 3ມ ສູງ 4,20ມ) ຫຼອມດ້ວຍທອງສຳລິດ ແລະ ຮູບຫຼໍ່ພຣະຄູຂີ້ຫອມ (ພຣະບໍລິວານ) ຈຳນວນ 5 ອົງ ຫຼອມດ້ວຍທອງເຫຼືອງ ລວມມູນຄ່າທັງໝົດ 1.125.000.000 ກີບ (US$103,000).

ນອກຈາກນັ້ນ ກໍຍັງມີເຈົ້າສັດທາສ່ວນບຸກຄົນຮ່ວມເປັນເຈົ້າພາບປະກອບສ່ວນເປັນມູນຄ່າລວມ 270.000.000 ກີບ (US$25.000) ໃນການຫຼອມ ຮູບຫຼໍ່ພຣະຄູຂີ້ຫອມອີກ 6 ອົງ ລວມທັງ: ຜູ້ອຳນວຍການໃຫຍ່ LXML ທ່ານ ສະໝານ ອະເນກາ, ປະທານບໍລິສັດຄູນໄຊພັດທະນາ ທ່ານ ເຄນຄຳ ສີລາຊາ, ອະດີດປະທານ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ (ສຄອຊ) ທ່ານ ສີສະຫວາດ ທິລາວົງ, ສຄອຊ ຕາງໜ້າໂດຍ ຮອງປະທານ ສຄອຊ ທ່ານ ດາວວອນ ພະຈັນທະວົງ, ຄະນະບໍລິຫານພ້ອມດ້ວຍພະນັກງານຂອງ ສຄອຊ, ປະທານ ບໍລິສັດ ວີດີຊີ ທ່ານ ບຸນລອງ ໄຊໂກສີ ແລະ ປະທານ ບໍລິສັດ ເວດທະສິນກໍ່ສ້າງຄົບວົງຈອນຈຳກັດຜູ້ດຽວ ທ່ານ ເວດທະສິນ ສອນເພັດ.

ເມືອງ ວິລະບູລີ ໄດ້ຈັດງານທາງພຸດທະສາດສະໜາເປັນເວລາ 5 ວັນ ນັບແຕ່ວັນທີ 1 ຫາ 5 ກຸມພາ 2022 ລວມທັງ ພິທີສົມໂພດພຣະພຸດທະຮູບ ແລະ ຕັກບາດຖວາຍສັງຄະທານແດ່ພະສົງສຳມະເນນ 109 ອົງ. ມີຫຼາຍພັນຄົນຈາກຊຸມຊົນທ້ອງຖິ່ນ ແລະ ເມືອງອື່ນໆເຂົ້າຮ່ວມງານດັ່ງກ່າວ.

ເຈົ້າໜ້າທີ່ພາກລັດທີ່ເຂົ້າຮ່ວມ ພິທີໃນວັນທີ 3 ກຸມພາ 2022 ລວມມີ ທ່ານນາງ ສວນສະຫວັນ ວິຍາເກດ, ລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ; ທ່ານ ສັນຕິພາບ ພົມວິຫານ, ເຈົ້າແຂວງໆສະຫວັນນະເຂດ; ທ່ານນາງ ຫຼີງທອງ ແສງຕາວັນ, ຮອງເຈົ້າແຂວງໆສະຫວັນນະເຂດ; ທ່ານ ຄຳພຸຍ ສີບຸນເຮືອງ, ອະດີດເຈົ້າເມືອງໆວິລະບູລີ; ທ່ານ ບົວສອນ ມະຫາວົງ, ອາດີດເຈົ້າເມືອງໆວິລະບູລີ, ຫົວໜ້າຂະແໜງການຂັ້ນແຂວງ ແລະ ເມືອງ; ຫົວໜ້າແນວໂຮມທ້ອງຖິ່ນ ແລະ ພາກສ່ວນອື່ນໆ.

**ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ຂອງ LXML** ໄດ້ກ່າວວ່າ: "ພວກເຮົາມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ໄດ້ປະກອບສ່ວນໃສ່ການຫຼອມ ແລະ ສົມໂພດພຣະພຸດທະຮູບພະໃຫຍ່ອົງຕື້. ການປະກອບສ່ວນ ນີ້ ສະແດງເຖິງຄວາມເຄົາລົບນັບຖືທີ່ມີມາຢ່າງຍາວນານຂອງ LXML ຕໍ່ ຮີດຄອງປະເພນີ ແລະ ວັດທະນະທຳລາວ ກໍຄື ຄວາມໝາຍໝັ້ນຂອງບໍລິສັດໃນການສົ່ງເສີມ ການພັດທະນາຊຸມຊົນທ້ອງຖິ່ນ."

ໃນສອງ-ສາມທົດສະຫວັດຜ່ານມາ, LXML ໄດ້ບໍລິຈາກໂລຫະທອງ ແລະ ທຶນຢ່າງເປັນປະຈຳ ເຂົ້າໃນການສ້າງຮູບຫຼໍ່ເປັນອະນຸສອນທີ່ສຳຄັນໃນ ສປປ ລາວ ເປັນຕົ້ນ ຮູບຫຼໍ່ພຣະພູດທະຮູບທີ່ສຳຄັນຢູ່ແຂວງ ສະຫວັນນະເຂດ, ຫົວພັນ, ບໍລິຄຳໄຊ, ໄຊຍະບູລີ, ອັດຕະປື ແລະ ບັນດາບ້ານຢູ່ອ້ອມຂ້າງບໍ່ຄຳ-ທອງເຊໂປນ ກໍຄື ການສ້າງຍອດຊໍ່ຟ້າຂອງຫໍຫຼັກເມືອງ ນະຄອນຫຼວງວຽງຈັນ, ເຄື່ອງໝາຍກາຊາດຂອງສະພາແຫ່ງຊາດ ແລະ ສຳນັກງານປະທານປະເທດ.

ມີຫຼາຍຄົນທີ່ອາດແປກໃຈ ເມື່ອຮູ້ວ່າ LXML ໄດ້ ບໍລິຈາກທອງ ຈາກບໍ່ຄຳ-ທອງເຊໂປນ ເຂົ້າໃນການສ້າງຮູບຫຼໍ່ຈຳລອງອົງສົມເດັດພຣະເຈົ້າອານຸວົງ ຢູ່ ນະຄອນຫຼວງວຽງຈັນ ທີ່ພວກເຮົາເຫັນໃນທຸກມື້ເວລາກາຍໄປກາຍມາຢູ່ແຄມຂອງ.



# LXML ປົກປັກຮັກສາມໍລະດົກທາງ ວັດທະນະທຳ ທີ່ມີອາຍຸຫຼາຍພັນປີ

**10 ສິງຫາ 2022** - ບໍ່ຄຳ-ທອງເຊໂປນ ໄດ້ມອບວັດຖຸບູຮານ 1,320 ລາຍການ ທີ່ຄົ້ນພົບໃນເຂດບໍ່ຄຳ-ທອງເຊໂປນ ໂດຍທີມງານນັກບູຮານວິທະຍາທີ່ອຸທິດເຫື່ອແຮງ ໃຫ້ແກ່ລັດຖະບານລາວ. ວັດຖຸບູຮານເຫຼົ່ານີ້ ປະກອບ ດ້ວຍເຄື່ອງທີ່ເຮັດຈາກ ຫີນ, ທອງ, ເຫຼັກ, ເຄື່ອງປັ້ນດິນເຜົາ, ເບົ້າຫຼອມ ແລະ ແກ້ວ.

ນັບຕັ້ງແຕ່ປີ 2008, LXML ໄດ້ລົງທຶນກວ່າ US$1,6 ລ້ານ ເຂົ້າໃສ່ການສະໜັບສະໜູນ ການອະນຸລັກມໍລະດົກທາງປະຫວັດສາດ ແລະ ວັດທະນະທຳລາວ ທີ່ມີດົນກວ່າ 3.000 ປີ ໂດຍຜ່ານການຮ່ວມມືກັບ ກົມມໍລະດົກ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ມະຫາວິທະຍາໄລແຫ່ງຊາດລາວ ແລະ ມະຫາວິທະຍາໄລ ເຈມສ໌ຄຸກ ຂອງປະເທດອົດສະຕຣາລີ. ການຮ່ວມມືດັ່ງກ່າວ ໄດ້ສະໜັບສະໜູນວຽກງານພາກສະໜາມ ທີ່ມີລັກສະນະພິເສດໃນລະດັບຊຸມຊົນທ້ອງຖິ່ນ, ລະດັບປະເທດ ແລະ ສາກົນ ເຊິ່ງໄດ້ມີອາສາສະໝັກທີ່ເປັນນັກສຶກສາຈາກນະຄອນຫຼວງວຽງຈັນ, ຊຸມຊົນທ້ອງຖິ່ນ, ປະເທດອົດສະຕຣາລີ, ນັກບູຮານວິທະຍາ, ແລະ ເຈົ້າໜ້າທີ່ຈາກກົມມໍລະດົກປະຈຳຢູ່ບໍ່ຄຳ-ທອງ ເຊໂປນ ໄດ້ຮ່ວມມືກັນຢ່າງໃກ້ຊິດ ໃນວຽກງານສຶກສາ-ຄົ້ນຄວ້າບູຮານວິທະຍາ ແລະ ເຜີຍແຜ່ຜົນການຄົ້ນຄວ້າສູ່ເວທີສາກົນ.

ທ່ານ ວັນສີ ກົວມົວ ຮອງລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ເຈົ້າໜ້າທີ່ ຈາກແຂວງສະຫວັນນະເຂດ ແລະ ເມືອງວິລະບູລີ ກໍໄດ້ເຂົ້າຮ່ວມພິທີມອບຮັບໃນຄັ້ງນີ້ ທີ່ນະຄອນຫຼວງວຽງຈັນ ໂດຍໄດ້ຮັບຮູ້ ແລະ ຍ້ອງຍໍຊົມເຊີຍບໍລິສັດ ໃນການສະໜັບສະໜູນ ທີ່ມີມາຢ່າງຍາວນານໃນການປົກປັກຮັກສາມໍລະດົກວັດທະນະທຳ ແລະ ເຫັນໄດ້ຄວາມສຳຄັນໃນການສືບຕໍ່ປົກປັກຮັກສາສະຖານທີ່ວັດທະນະທຳເພື່ອສົ່ງເສີມການທ່ອງທ່ຽວຢູ່ໃນ ສປປ ລາວ.

ທ່ານ ສະໝານ ອະເນກາ - ຜູ້ອຳນວຍການໃຫຍ່ LXML ໄດ້ມອບວັດຖຸບູຮານດັ່ງກ່າວ



ຈຳນວນ 1320 ລາຍການໃຫ້ແກ່ ທ່ານ ພະຂັນໄຊ ສີຄັນໄຊ ຫົວໜ້າກົມມໍລະດົກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ວັດຖຸບູຮານເຫຼົ່ານີ້ຈະໄດ້ນຳໄປຈັດວາງສະແດງເພື່ອການຮຽນຮູ້ຢູ່ທີ່ ຫໍພິພິດທະພັນແຫ່ງຊາດ, ຫໍພິພິດທະພັນແຂວງສະຫວັນນະເຂດ, ຫໍວັດທະນະທຳເມືອງວິລະບູລີ ແລະ ກົມມໍລະດົກ. LXML ໄດ້ມອບວັດຖຸບູຮານຫຼາຍກວ່າ 7.881 ລາຍການໃນປີ 2019, ແລະ 208 ລາຍການໃນເດືອນກຸມພາ 2022 ໃຫ້ແກ່ລັດຖະບານລາວ ທັງໄດ້ສະໜອງຕູ້ວາງສະແດງວັດຖຸບູຮານມູນຄ່າກວ່າ 144 ລ້ານກີບ ໃຫ້ແກ່ຫໍພິພິດຕະພັນແຫ່ງຊາດລາວ.

ທັງສອງຝ່າຍໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈ ເພື່ອເສີມຂະຫຍາຍບັນດາຫຼັກການຮ່ວມມືໃນການປົກປັກຮັກສາມໍລະດົກວັດທະນະທຳໃນອະນາຄົດ.

**ທ່ານ ສະໝານ ອະເນກາ ຜູ້ອຳນວຍການໃຫຍ່ LXML** ໄດ້ກ່າວວ່າ: "ມື້ນີ້ ເປັນນິມິດໝາຍອັນດີຂອງການຮ່ວມມືຫຼາຍກວ່າໜຶ່ງທົດສະວັດກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ. ນີ້ເປັນຂີດໝາຍທີ່ສຳຄັນໃນການເປັນຄູ່ຮ່ວມງານຂອງ LXML. ບໍລິສດ ມຸ່ງໝັ້ນໃນການເຮັດວຽກຢ່າງໃກ້ຊິດ ກັບກະຊວງ ອີກຢ່າງໜ້ອຍສິບປີ ຈົນກວ່າຈະສິ້ນສຸດອາຍຸບໍ່ແຮ່ ເພື່ອປົກປັກຮັກສາມໍລະດົກວັດທະນະທຳລາວ."

ການຄົ້ນພົບວັດຖຸບູຮານ ແລະ ແຫຼ່ງບູຮານວິທະຍາທີ່ສຳຄັນເຫຼົ່ານີ້ ໃນຂົງເຂດອ້ອມຂ້າງບໍ່ຄຳ-ທອງເຊໂປນໄດ້ເປີດປະຕູສູ່ຄວາມສີວິໄລຂອງອາລິຍະທຳບູຮານທີ່ ໜ້າຕື່ນເຕັ້ນທີ່ສະແດງໃຫ້ພວກເຮົາເຫັນວ່າ ບັນພະບູລຸດຂອງພວກເຮົາໄດ້ມີຊີວິດຢູ່ແນວໃດໃນຫຼາຍພັນປີກ່ອນໜ້ານີ້. ໃນເດືອນ ມີນາ 2018, ຄະນະບູຮານວິທະຍາ ໄດ້ຄົ້ນພົບໄມ້ຄ້ຳ-ກັນພັງຢູ່ໃນຂຸມສ້າງບໍ່ແຮ່ທອງໃນສະໄໝບູຮານຫຼາຍກວ່າ 200 ຂຸມບໍ່ ທີ່ມີອາຍຸຫຼາຍກວ່າ 3000 ປີກ່ອນໜ້ານີ້ ແລະ ບາງລາຍການກໍ່ມີອາຍຸຫຼາຍກວ່າສິບພັນປີ.



ການຂຸດຄົ້ນບໍ່ແຮ່ມີຄວາມສຳຄັນຕະຫຼອດໄລຍະປະຫວັດສາດການພັດທະນາຂອງມະນຸດ. ເມືອງວິລະບູລີ ຖືກຮັບຮູ້ໃນລະດັບສາກົນວ່າ ເປັນໜຶ່ງໃນເຂດທຳອິດທີ່ມີການຂຸດຄົ້ນບໍ່ແຮ່ ແລະ ສະຖານທີ່ໂລຫະກິດ ຢູ່ໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້. ການຂຸດຄົ້ນ-ປຸງແຕ່ງແຮ່ທາດໃນສະໄໝບູຮານຢູ່ໃນຂົງເຂດນີ້ ແມ່ນໄດ້ສືບຕໍ່ປະຕິບັດກັນມາຈົນເຖິງປະມານ 1300 ປີກ່ອນ (ຄສ 700) ເຊິ່ງເປັນໄລຍະທີ່ຜູ້ຄົນໄດ້ຂຸດຄົ້ນ-ຫຼໍ່ຫຼອມແຮ່ທອງທີ່ອຸດົມສົມບູນຢູ່ໃນຈຸດ 'ເປີ້ນເບົ້າຫຼໍ່' ແລະ ຢູ່ທີ່ 'ທົ່ງນາເງືອກ'.

ວັດຖຸບູຮານອື່ນໆທີ່ຄົ້ນຄົບໃນບໍລິເວນນີ້ ແມ່ນລວມມີ ອຸປະກອນນຳໃຊ້ໃນການຂຸດຄົ້ນແຮ່ ເຊັ່ນ: ຂັ້ນໄດໄມ້ກົມ ແລະ ລູກໝາກລໍ້-ລໍອກ, ໄມ້ຄ້ຳ, ກະຕ່າໄມ້ໄຜ່ ແລະ ເຊືອກຫວາຍ; ຄ້ອງບ້າງທອງສຳລິດ (ທອງເຫຼືອງ) ຈາກຍຸກທອງເຫຼືອງ ເຊິ່ງວາງສະແດງໄວ້ຢູ່ທີ່ຫໍພິພິດທະພັນແຫ່ງຊາດໃນປັດຈຸບັນ; ກ້ອນທອງ, ເຄື່ອງປັ້ນດິນເຜົາ, ກະດິ່ງທອງສຳລິດ, ເຄື່ອງປະດັບ, ເຄື່ອງໃຊ້ໃນພິທີກຳເສັ່ນໄຫວ້ ແລະ ວັດຖຸບູຮານອື່ນໆ ເຊິ່ງຊີ້ໃຫ້ເຫັນວ່າ ປະເທດລາວໃນອະດີດ ເປັນສະຖານທີ່ປະຫວັດສາດທີ່ສຳຄັນຍິ່ງໃນ ພາກພື້ນແຫ່ງນີ້.



*ເມື່ອວັນທີ 4 ກຸມພາ 2022, LXML ໄດ້ມອບວັດຖຸບູຮານ ທີ່ຄົ້ນພົບໃນເຂດຂຸດຄົ້ນຄຳ-ທອງ ເຊໂປນ ຈຳນວນ 281 ລາຍການ ໃຫ້ແກ່ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.*

# ການພັດທະນາຊຸມຊົນ - ການບໍລິຈາກເຄື່ອງເອັກສ໌ເຣ ໃຫ້ແກ່ ໂຮງໝໍເມືອງວິລະບູລີ



*"ເອົາປາໃຫ້ຄົນ, ລາວຈະກິນກຸ້ມມື້ໜຶ່ງ. ສອນຄົນໃຫ້ຮູ້ຕຶກເບັດ, ລາວຈະລ້ຽງກຸ້ມ ຕົນເອງ ຕະຫຼອດຊີວິດ."* ຄຳສຸພາສິດນີ້ມີອາຍຸໄດ້ຢ່າງໜ້ອຍ 120 ປີ ໃນຫຼາຍພາສາ ແລະ ວັດທະນະທຳ. ຄຳສຸພາສິດ ບອກໃຫ້ເຮົາຮູ້ວ່າ ຈະເປັນການດີກວ່າ ຖ້າຈະສອນຄົນໃຫ້ຮູ້ເຮັດ ດີກວ່າສຳເລັດແລ້ວ ຫຼື ມອບຜົນໃຫ້ເຂົາເຈົ້າ.

ຄຳສຸພາສິດນີ້ ສະທ້ອນອອກໃນ ວຽກງານພັດທະນາຊຸມຊົນຂອງພວກເຮົາແນວໃດ?

ໃນປີ 2020, LXML ໄດ້ຊື້ເຄື່ອງເອັກສ໌ເຣ ໃຫ້ແກ່ ໂຮງໝໍເມືອງວິລະບູລີ ຜ່ານ ກອງທຶນພັດທະນາຊຸມຊົນມູນຄ່າປະມານ US$85.000.

ໂດຍສືບສານຕໍ່ຈາກ ການສະໜັບສະໜູນດັ່ງກ່າວ, ພວກເຮົາໄດ້ສະໜອງທຶນ US$5.000 ເຂົ້າໃສ່ການຝຶກອົບຮົມໝໍ ແລະ ເຈົ້າໜ້າທີ່ຂອງໂຮງໝໍເມືອງວິລະບູລີ ກ່ຽວກັບ ການນຳໃຊ້ເຄື່ອງດັ່ງກ່າວ ລວມທັງວິທີການອ່ານ-ວິເຄາະຜົນ ກໍຄື ການບຳລຸງຮັກສາເຄື່ອງ.

ເຄື່ອງເອກສ໌ເຣ ຈະຍົກລະດັບຄວາມອາດສາມາດ ແລະ ຄຸນນະພາບການບໍລິການດ້ານສຸຂະພາບ ຢູ່ ໂຮງໝໍ ແລະ ເມືອງ ຜ່ານການກວດ ແລະ ວິເຄາະທີ່ທັນການ, ຖືກຕ້ອງ ແລະ ຊັດເຈນ ເຊິ່ງ ຖ້າສົມທຽບໃສ່ເມື່ອກ່ອນແມ່ນຕ້ອງໄດ້ສົ່ງຄົນເຈັບໜັກ ໄປຮອດນະຄອນໄກສອນ ພົມວິຫານ ເພື່ອ ເອັກສ໌ເຣ. ໃນປັດຈຸບັນນີ້ ແມ່ນສາມາດກວດໄດ້ຢ່າງວ່ອງໄວ ຢູ່ ກັບເມືອງວິລະບູລີ.

ມາຮອດປັດຈຸບັນ, ໂຮງໝໍເມືອງວິລະບູລີ ໄດ້ເອກສ໌ເຣ ໃຫ້ແກ່ຄົນເຈັບເກືອບ 2.000 ຄົນ ແລະ ຈຳນວນຄົນເຈັບທີ່ໄດ້ຖືກນຳສົ່ງໄປໂຮງໝໍຢູ່ເມືອງ ແລະ ແຂວງອື່ນກໍເຫັນວ່າຫລຸດລົງ.

ຈາກ ການສະໜັບສະໜູນຂອງ LXML ຜ່ານກອງທຶນພັດທະນາຊຸມຊົນໃນຄັ້ງນີ້, ໂຮງໝໍເມືອງວິລະບູລີ ຈະສືບຕໍ່ບຳລຸງຮັກສາເຄື່ອງເອັກສ໌ເຣ, ຖ່າຍທອດຄວາມຮູ້ໃຫ້ແກ່ແພດໝໍອື່ນໆ ແລະ ຮຸ່ນຫຼັງ ເພື່ອໃຫ້ສາມາດສະໜອງການບໍລິການດ້ານການແພດສຳຄັນໃຫ້ແກ່ ສະມາຊິກຊຸມຊົນໃນເມືອງວິລະບູລີ 45.000 ກວ່າຄົນ.

ຕັ້ງແຕ່ປີ 2003, ກອງທຶນພັດທະນາຊຸມຊົນໄດ້ລົງທຶນເກືອບ US$910.000 ເຂົ້າໃສ່ ໂຄງການສາທາລະນະສຸກ ເຊິ່ງໃນນັ້ນ 35% ແມ່ນໄດ້ຈັດສັນເຂົ້າໃສ່ ໂຮງໝໍເມືອງວິລະບູລີ (US$317,000). ການສະໜັບສະໜູນດັ່ງກ່າວລວມມີ ພື້ນຖານໂຄງລ່າງສາທາລະນະສຸກ, ລົດໂຮງໝໍ, ອຸປະກອນການແພດ ແລະ ການສ້າງຂີດຄວາມອາດສາມາດໃຫ້ແກ່ແພດໝໍ.

# ຊຸມຊົນທ້ອງຖິ່ນ-ເຈົ້າພາບ ຢ້ຽມຢາມໂຄງການສຳຫຼວດບໍ່ແຮ່ໃຕ້ດິນ ຂອງ ເຊໂປນ



**4 ພຶດສະພາ 2022** - ຄະນະບ້ານ ແລະ ຕາງໜ້າອຳນາດການປົກຄອງທ້ອງຖິ່ນ 4 ທ່ານ ຈາກບ້ານເມືອງຫຼວງ ແລະ ເມືອງວິລະບູລີ ໄດ້ໃຫ້ກຽດມາຢ້ຽມຢາມການສຳຫຼວດບໍ່ແຮ່ໃຕ້ດິນຂອງໂຄງການຂຸດຄົ້ນບໍ່ຄຳ-ທອງ ເຊໂປນ ເພື່ອຕິດຕາມກວດກາ ແລະ ຮັບຮູ້ວິທີການດຳເນີນການສຳຫຼວດບໍ່ໃຕ້ດິນ ແລະ ຜົນກະທົບທີ່ອາດເກີດຂຶ້ນ. ບ້ານເມືອງຫຼວງ ຕັ້ງຢູ່ຫ່າງຈາກເໝືອງຂຸດຄົ້ນບໍ່ດິສໂກເວີຣີ ຂອງບໍ່ຄຳ-ທອງເຊໂປນທີ່ເປັນບ່ອນເຈາະທາງເຂົ້າອຸບໂມງສຳຫຼວດບໍ່ແຮ່ປະມານ 2 ກິໂລແມັດ. ຄະນະຢ້ຽມຢາມໃນຄັ້ງນີ້ໄດ້ມີໂອກາດຮູ້-ເຫັນຂັ້ນຕອນລະເບີດຫີນ ເພື່ອເຂົ້າໄປໃນບໍ່ແຮ່ໃຕ້ດິນ ພາຍຫຼັງໄດ້ມີການກວດທາງເຂົ້າໄປສູ່ອຸບມົງ.

**ທ່ານ ພອນໄຊ ວອນວິມານ, ນາຍບ້ານໆເມືອງຫຼວງ** ໄດ້ກ່າວວ່າ: "ໃນປັດຈຸບັນ, ເຫັນວ່າສຽງ ແລະ ການສັ່ນສະເທືອນ ແມ່ນ ພຽງແຕ່ໄດ້ຍິນໄປເຖິງບ້ານຂອງພວກຂ້າພະເຈົ້າ ໃນລະດັບທີ່ເບົາບາງຫຼາຍ. ຈາກການໄດ້ເຫັນເອງກັບຕາຂະບວນການລະເບີດຫີນ ແລະ ການເຂົ້າໄປໃນອຸບມົງ, ຂ້າພະເຈົ້າກໍມີຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບຂະບວນການຂຸດຄົ້ນບໍ່ແຮ່ໃຕ້ດິນ ແລະ ຈະຊ່ວຍອະທິບາຍ ພ້ອມທັງຈະແກ້ໄຂຂໍ້ຂ້ອງໃຈທີ່ຊຸມຊົນອາດຍົກຂຶ້ນ ຢ່າງສ້າງສັນ. ໃນໄລຍະຕໍ່ໄປພວກຂ້າພະເຈົ້າຈະມາຢ້ຽມຢາມອີກຄັ້ງເມື່ອການກໍ່ສ້າງອຸບມົງ ມີຄວາມຄືບໜ້າ."

ໃຫ້ກຽດເປັນເຈົ້າພາບຂອງການຢ້ຽມຢາມໃນຄັ້ງນີ້ມີ ປະທານບໍລິສັດ ຊີເຟີງ LXML ທ່ານ ຟູ ເຊຍເຊີນ, ຜູ້ຈັດການດ້ານການຂຸດຄົ້ນບໍ່ແຮ່ໃຕ້ດິນ ທ່ານ ເຈສັນ ຄາຍລີ້.

**ທ່ານ ເຈສັນ** ໄດ້ກ່າວວ່າ: "ພວກເຮົາຈັດຕັ້ງປະຕິບັດ ວິທີການ ກໍຄື ຫຼັກການພາກປະຕິບັດທີ່ດີທີ່ສຸດ ເພື່ອຫລຸດຜ່ອນຜົນກະທົບຕໍ່ຊຸມຊົນ ໂດຍໃຫ້ມີໜ້ອຍທີ່ສຸດ. ພວກເຮົາສືບຕໍ່ເຮັດວຽກຢ່າງໃກ້ຊິດກັບຊຸມຊົນເຈົ້າພາບ ແລະ ເຈົ້າໜ້າທີ່ເມືອງເພື່ອແກ້ໄຂຂໍ້ຂ້ອງໃຈ, ປູກຈິດສຳນຶກ-ເຜີຍແຜ່ຂໍ້ມູນຂ່າວສານ ແລະ ຮັບປະກັນໃຫ້ກິດຈະການຂຸດຄົ້ນບໍ່ແຮ່ ໄດ້ມີການແບ່ງປັນຜົນປະໂຫຍດຮ່ວມກັນຢ່າງທົ່ວເຖິງ"

ການສຳຫຼວດບໍ່ແຮ່ໃຕ້ດິນ ຈະສະໜັບສະໜູນອະນາຄົດຂອງບໍ່ຄຳ-ທອງ ເຊໂປນ ແລະ ປະກອບສ່ວນຕໍ່ກັບການເຕີບໂຕທາງດ້ານເສດຖະກິດ-ສັງຄົມຂອງ ສປປ ລາວ ສູ່ປີ 2033 ເປັນຢ່າງຕ່ຳ. ບໍລິສັດ ຊີເຟີງ LXML ມີແຜນຂຸດຄົ້ນບໍ່ແຮ່ໃຕ້ດິນທີ່ທັນສະໄໝແຫ່ງທຳອິດໃນ ສປປ ລາວ ໂດຍຈະຖ່າຍທອດຄວາມຊຳນິຊຳນານງານ ແລະ ເຕັກນິກສະເພາະໃຫ້ແກ່ບຸກຄະລາກອນວິຊາການ ທີ່ເປັນຄົນລາວ ກໍຄື ສປປ ລາວ.

# ການຂຶນຂວາຍຊຸມຊົນກ່ຽວກັບ ຄວາມປອດໄພໃນບໍ່ແຮ່

ນັບຕັ້ງແຕ່ເດືອນມັງກອນ 2022 ເປັນຕົ້ນມາ, ທີມງານພົວພັນຊຸມຊົນຂອງພວກເຮົາ ໄດ້ລົງຂົນຂວາຍສະມາຊິກຊຸມຊົນກ່ຽວກັບ ຄວາມສ່ຽງຂອງການເຂົ້າໄປໃນພື້ນທີ່ບໍ່ແຮ່ແບບບໍ່ໄດ້ຮັບອະນຸຍາດ ແລະ ບັນຫາດ້ານຄວາມປອດໄພທີ່ກ່ຽວຂ້ອງ. ການສືບຕໍ່ເຮັດວຽກຢ່າງໃກ້ຊິດກັບຫົວໜ້າແນວໂຮມທ້ອງຖິ່ນແມ່ນມີຄວາມສຳຄັນ ໃນການ ເຜີຍແຜ່ ແລະ ກະຈາຍຂໍ້ຄວາມກ່ຽວກັບ ຄວາມອັນຕະລາຍຕໍ່ຄວາມປອດໄພ ແລະ ການເຂົ້າເຖິງ ພື້ນທີ່ຂຸດຄົ້ນບໍ່ແຮ່.

ມາຮອດປັດຈຸບັນ, ທີມງານຂອງພວກເຮົາໄດ້ເຂົ້າເຖິງ 61 ຄົນ ໃນ 5 ບ້ານ, ໂດຍໄດ້ປູກຈິດສຳນຶກກ່ຽວກັບ ຄວາມອັນຕະລາຍຂອງການເຂົ້າພື້ນທີ່ຂຸດຄົ້ນບໍ່ແຮ່ແບບບໍ່ໄດ້ຮັບອະນຸຍາດ ລວມທັງ ຄວາມປອດໄພຕາມເສັ້ນທາງລົດແກ່ແຮ່ ແລະ ຄວາມອັນຕະລາຍອື່ນໆ.

ອີງຕາມມາດຕະການປ້ອງກັນ COVID-19 ໃນໄລຍະນັ້ນ, ຈຶ່ງໄດ້ຈຳກັດຈຳນວນຜູ້ເຂົ້າຮ່ວມສະເພາະຄະນະຫ້ອງການບ້ານ ແລະ ເຈົ້າໜ້າທີ່ທ້ອງຖິ່ນ ຜູ້ທີ່ຈະປະກາດເນື້ອໃນຂໍ້ຄວາມຕໍ່ທາງ ໂທລະໂຄ່ງ ແລະ ແບບເຊິ່ງໜ້າບອກຕໍ່ໆກັນໃນຊຸມຊົນ.

ນອກຈາກຊ່ອງທາງນີ້ແລ້ວ, ທີມງານພົວພັນຊຸມຊົນກໍຍັງໄດ້ຂົນຂວາຍສະມາຊິກຊຸມຊົນກ່ຽວກັບປະເດັນສຳຄັນທີ່ຕິດພັນກັບ ການພັດທະນາຊຸມຊົນ ແລະ ໂຄງການຄຳ-ທອງເຊໂປນ.

ທີມງານຂົນຂວາຍຊຸມຊົນຍັງໄດ້ລົງຢ້ຽມຢາມອີກ 5 ບ້ານ ອ້ອມຂ້າງ ບໍ່ຄຳ-ທອງ ເຊໂປນ ໃນອາທິດຕໍ່ໆມາເພື່ອສືບຕໍ່ ເຜີຍແຜ່ຂໍ້ຄວາມກ່ຽວກັບ ຄວາມປອດໄພໃກ້ພື້ນທີ່ຂຸດຄົ້ນບໍ່ແຮ່.





*ພະນັກງານ LXML ຮ່ວມກັບຊຸມຊົນ ໄດ້ປູກຕົ້ນໄມ້ຫຼາຍກວ່າ 500 ຕົ້ນ ເນື່ອງໃນໂອກາດ ວັນປູກຕົ້ນໄມ້ແຫ່ງຊາດ ແລະ ວັນເດັກນ້ອຍສາກົນ. LXML ໄດ້ປູກຕົ້ນໄມ້ 8.500 ຕົ້ນ ຢູ່ອ້ອມຂ້າງ ບໍ່ຄຳ-ທອງ ເຊໂປນ ໃນໄລຍະ ດຳເນີນກິດຈະກຳຟື້ນຟູ.*

## ວັນເຮົາ ເຫດການສຳຄັນ

**10 ຕຸລາ**
ບຸນອອກພັນສາ ປະວໍລະນາ

**11 ຕຸລາ**
ບຸນຊ່ວງເຮືອ ທ່າວັດຈັນ

**08 ພະຈິກ**
ບຸນນະມັດສະການພະທາດຫຼວງວຽງຈັນ

**02 ທັນວາ**
ວັນສະຖາປະນາ ສປປ ລາວ




# LXML ຈັດພິທີເປີດ ອຸມົງທາງເຂົ້າ ເພື່ອເຈາະສຳຫຼວດບໍ່ແຮ່ໃຕ້ດິນ

**4 ກຸມພາ 2022** - LXML ໄດ້ຈັດພິທີຕາມຮີດຄອງປະເພນີ ເພື່ອສະເຫຼີມສະຫຼອງການເປີດ ອຸມົງທາງເຂົ້າ ເພື່ອເຈາະສຳຫຼວດບໍ່ແຮ່ໃຕ້ດິນ ຢູ່ ພາກສະໜາມບໍ່ຄຳ-ທອງ ເຊໂປນ. ໂຄງການດັ່ງກ່າວນີ້ ແນໃສ່ສ້າງບໍ່ແຮ່ໃຕ້ດິນທີ່ທັນສະໄໝແຫ່ງທຳອິດຢູ່ໃນ ສປປ ລາວ.

**ທ່ານ ພໍ ແຮຣິສ໌, ປະທານ LXML** ໄດ້ກ່າວວ່າ: "ໂຄງການຄຳ-ທອງເຊໂປນ ມີປະຫວັດສາດການຂຸດຄົ້ນບໍ່ແຮ່ ມາຫຼາຍພັນປີ. ການພັດທະນາໃໝ່ນີ້ ຈະຍືດອາຍຸຂອງບໍ່ຄຳ-ທອງ ເຊໂປນ ດ້ວຍ ອຸປະກອນທີ່ທັນສະໄໝ ແລະ ເຕັກນິກການຂຸດຄົ້ນບໍ່ແຮ່ທີ່ນຳໜ້າໃນໂລກ."

LXML ຈະນຳເອົາຊ່ຽວຊານ ກໍຄື ຄວາມຊຳນິຊຳນານ ແລະ ອຸປະກອນທີ່ມີຄຸນຄ່າມານຳໃຊ້ເຂົ້າໃນໂຄງການຢູ່ ສປປ ລາວ ແລະ ໝັ້ນໃຈວ່າ ໂຄງການດັ່ງກ່າວຈະປະສົບຜົນສຳເລັດ. ວຽກງານສຳຫຼວດ ຢູ່ບໍ່ໃຕ້ດິນ ແມ່ນຈະເລີ່ມໃນບໍ່ເກົ່າ ຢູ່ ບໍ່ຄຳ-ທອງ ເຊໂປນ. LXML ພວມປຶກສາຫາລືກັບຂະແໜງການພາກລັດທີ່ກ່ຽວຂ້ອງ ກ່ຽວກັບລາຍລະອຽດ ແລະ ຜົນກະທົບຕ່າງໆທີ່ອາດເກີດຂຶ້ນ.

**ທ່ານ ພໍ ແຮຣິສ໌** ໄດ້ກ່າວຕື່ມວ່າ: "ຂ້າພະເຈົ້າມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ LXML ໄດ້ປະກອບສ່ວນຕໍ່ການພັດທະນາເສດຖະກິດ-ສັງຄົມ ໃນ ສປປ ລາວ. ບໍລິສັດແມ່ ຊີເຟີງ ຂຸດຄົ້ນຄຳ ໄດ້ລົງທຶນມະຫາສານເຂົ້າໃນໂຮງງານ ແລະ ອຸປະກອນ ເພື່ອໃຫ້ສາມາດກັບຄືນມາຜະລິດ ແລະ ຂະຫຍາຍການຜະລິດຄຳ ຢູ່ ໂຄງການຄຳ-ທອງເຊໂປນ. ຂ້າພະເຈົ້າແນ່ໃຈວ່າ ໂຄງການບໍ່ແຮ່ໃຕ້ດິນນີ້ ຈະເປັນຕົວຢ່າງທີ່ດີສຳລັບ ຜູ້ປະກອບການຂຸດຄົ້ນບໍ່ແຮ່ອື່ນໆໃນ ປະເທດ ແລະ ຈະເປັນໂອກາດໃຫ້ ພັດທະນາຊັບພະຍາກອນແຮ່ທາດຢູ່ພາກສະໜາມອື່ນໆຢ່າງຍືນຍົງດ້ວຍການນຳໃຊ້ເຕັກນິກທີ່ຄ້າຍຄືກັນນີ້."

LXML ໄດ້ ດຳເນີນການຂຸດຄົ້ນບໍ່ແຮ່ຄຳ-ທອງເຊໂປນ ແບບບໍ່ເປີດຕັ້ງແຕ່ປີ 2003 ເປັນຕົ້ນມາ. ໃນສອງທົດສະວັດຜ່ານມາ, LXML ໄດ້ປະກອບສ່ວນຫຼາຍກວ່າ US$1,6 ຕື້ ເປັນລາຍຮັບໂດຍກົງໃຫ້ແກ່ລັດຖະບານລາວ ຜ່ານການຈ່າຍພາສີອາກອນ ແລະ ຄ່າຊັບພະຍາກອນແຮ່ທາດ, ຫຼາຍຮ້ອຍລ້ານໂດລາເປັນຜົນປະໂຫຍດທາງອ້ອມ ຜ່ານການພັດທະນາຊຸມຊົນ, ການສ້າງວຽກເຮັດງານທຳ ແລະ ການຝຶກອົບຮົມສ້າງສີມືແຮງງານ. LXML ໝາຍໝັ້ນ ໃນການເປັນບໍລິສັດບໍ່ແຮ່ຕົວແບບທີ່ດີເລີດ ແລະ ເປັນຄູ່ຮ່ວມພັດທະນາ ຢູ່ໃນ ສປປ ລາວ.





# ການອ່າງຍແລວນ້ຳ ນ້ຳກອກຂອງ ໂຄງການເຊໂປນ ໄດ້ຮັບການຍ້ອງຍໍ ເປັນຕົວແບບໃນ ສປປ ລາວ

**19 – 20 ພຶດສະພາ 2022** - ໂຄງການເຊໂປນ ໄດ້ເປັນເຈົ້າພາບຕ້ອນຮັບຄະນະວິຊາການລັດຖະບານ ທີ່ໄດ້ລົງມາຕິດຕາມກວດກາ ການອ່າງຍແລວນ້ຳ ນ້ຳກອກ ແລະ ການກວດກາພາກສະໜາມປະຈຳປີ. ຄະນະລັດຖະບານຂັ້ນສູນກາງ, ແຂວງ ແລະ ເມືອງໄດ້ດຳເນີນການກວດກາຢ່າງເປັນປົກກະຕິໃນທຸກໆປີເພື່ອຕິດຕາມຄວາມຄືບໜ້າ ແລະ ປະເມີນການປະຕິບັດວຽກງານໃຫ້ສອດຄ່ອງກັບຄວາມໝາຍໝັ້ນ ແລະ ມາດຕະຖານຕ່າງໆ. ຄະນະທີ່ຮ່ວມໃນຄັ້ງນີ້ມີຜູ້ຕາງໜ້າ 33 ທ່ານ ຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງພະລັງງານ ແລະ ບໍ່ແຮ່ໃນທຸກໆຂັ້ນ, ເຈົ້າເມືອງວິລະບູລີ ແລະ ທີມງານຂອງ LXML. ຄະນະກວດກາຄັ້ງນີ້ໄດ້ກັບມາຢ້ຽມຢາມກວດກາພາກສະໜາມອີກຄັ້ງ ໃນເວລາທີ່ວຽກງານກໍ່ສ້າງການອ່າງຍແລວນ້ຳ ນ້ຳກອກສຳເລັດລົງ.

ໃນປີນີ້, ຄະນະໄດ້ເອົາໃຈໃສ່ກວດກາຄວາມຄືບໜ້າຂອງການກໍ່ສ້າງການອ່າງຍແລວນ້ຳ ນ້ຳກອກ. ຄະນະໄດ້ສະແດງຄວາມຮັບຮູ້ວ່າ ໂຄງການເຊໂປນໄດ້ຈັດຕັ້ງປະຕິບັດແຜນງານການຄຸ້ມຄອງສິ່ງແວດລ້ອມ ແລະ ຊຸມຊົນທີ່ຮອບດ້ານ ພ້ອມທັງໄດ້ຢັ້ງຢືນວ່າ ການອ່າງຍແລວນ້ຳຂອງເຊໂປນ ເປັນແບບຢ່າງທີ່ດີສຳລັບໂຄງການອື່ນໆ.

ທ່ານ ປອ ແສງມົວ ທາວເພຍຫຼວງ, ຮອງຫົວໜ້າກົມຊັບພະຍາກອນນ້ຳ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຜູ້ນຳພາຄະນະ ໄດ້ມີຄຳເຫັນຕາງໜ້າຄະນະວ່າ: ການອ່າງຍແລວນ້ຳຂອງໂຄງການເຊໂປນຈະເປັນຕົວແບບ ແລະ ວາງມາດຕະຖານສຳລັບໂຄງການອື່ນໆໃນ ສປປ ລາວ ເຊັ່ນ ໂຄງການພະລັງງານໄຟຟ້ານ້ຳຕົກ.

ສະພາແຫ່ງຊາດ ໄດ້ອະນຸມັດການອ່າງຍແລວນ້ຳໄລຍະທີສອງຂອງ ໂຄງການເຊໂປນ ໃນເດືອນ ຕຸລາ 2020. ໄລຍະທີໜຶ່ງແມ່ນການກໍ່ສ້າງຄອງ ອ່າງຍແລວນ້ຳຊົ່ວຄາວເຊິ່ງໄດ້ສຳເລັດໃນປີ 2021. ການອ່າງຍແລວນ້ຳ ນ້ຳກອກໄລຍະສອງແມ່ນສຳເລັດໄປແລ້ວ ໃນເຄິ່ງປີຫຼັງຂອງປີນີ້.

ຈຸດປະສົງຂອງການອ່າງຍແລວນ້ຳ ແມ່ນເພື່ອໃຫ້ສາມາດຂຸດຄົ້ນແຮ່ຄຳ ຄຽງຄູ່ກັບຮັກສາການໄຫຼຂອງແມ່ນ້ຳ ກໍຄື ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຈາກການຂຸດຄົ້ນບໍ່ແຮ່. ລະດູຝົນ ໄດ້ສ້າງສິ່ງທ້າທາຍ ແຕ່ວຽກງານການອ່າງຍແລວນ້ຳ ກໍຍັງສືບຕໍ່ເດີນແມ່ນແລ່ນສະດວກ.


ພາບທາງອາກາດ ຂອງການອ່າງຍແລວນ້ຳກອກ

# ໂຄງການເຊໂປນນຳໃຊ້ເຄື່ອງຕິດຕາມ ການເໜັງຕີງຫຼັງ ການລະເບີດຫີນ



*ບົດຄວາມໂດຍ: ທ່ານ ຈອສ ກາບາໂຊ, ນັກທໍລະນີສາດອາວຸໂສ - ທີ່ປຶກສາເຕັກນິກດ້ານການຜະລິດ*

ທີ່ໂຄງການເຊໂປນ, ສ່ວນໜຶ່ງໃນຂະບວນການຄວບຄຸມຄຸນນະພາບແຮ່ ລວມມີການຕິດຕາມ ແລະ ການເໜັງຕີງຂອງບໍ່ອກແຮ່ ພາຍຫຼັງການລະເບີດຫີນ ເພື່ອຫລຸດຜ່ອນການສູນເສຍແຮ່ (ເສຍແຮ່ໄປກັບຫີນເສດ), ການລະບຸແຮ່ທີ່ຜິດພາດ (ສົ່ງປະເພດແຮ່ໄປຜິດລານກອງແຮ່) ແລະ ການເຈືອຈາງ (ສົ່ງຫີນເສດໄປທີ່ໂຮງໂມ້).

ນັບຕັ້ງແຕ່ເດືອນພະຈິກ 2020, ໂຄງການເຊໂປນໄດ້ນຳໃຊ້ເຄື່ອງວັດແທກຕິດຕາມການເໜັງຕີງຫຼັງການລະເບີດຫີນ (BMMs) ເພື່ອຕິດຕາມການເໜັງຕີງຂອງການລະເບີດຫີນ - ເຊິ່ງເປັນຂະບວນການ ວັດແທກການເຄື່ອນທີ່ຂອງແຮ່ພາຍຫຼັງ ການລະເບີດ.

ມາຮອດປະຈຸບັນນີ້, ຂະບວນການດັ່ງກ່າວສາມາດປະຢັດງົບປະມານໄດ້ຢ່າງໜ້ອຍ $165.077 ຈາກການໃຊ້ຈ່າຍທີ່ກ່ຽວຂ້ອງກັບການສູນເສຍແຮ່ ນອກຈາກນັ້ນຍັງສາມາດປະຢັດໄດ້ $188.168 ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການເຈືອຈາງຂອງແຮ່ ດ້ວຍການນຳໃຊ້ລະບົບຕິດຕາມການເໜັງຕີງຫຼັງຈາກລະເບີດຫີນ.

***ວິທີການເຮັດວຽກມີຄືແນວໃດ?*** BMMs ແມ່ນໄດ້ຕິດຕັ້ງໃນຮູເຈາະທີ່ໄດ້ຮັບການອອກແບບມາເປັນພິເສດ ເພື່ອໃຫ້ຜູ້ຄວບຄຸມສາມາດເຂົ້າໃຈລັກສະນະການເໜັງຕີງຫຼັງ ການລະເບີດຫີນໃນຮູບແບບສາມມິຕິ. ໄດ້ມີການນຳໃຊ້ຊອບແວເຕັກໂນໂລຊີການເໜັງຕີງຫຼັງຈາກການລະເບີດ (BMT) ເພື່ອຕິດຕາມການເໜັງຕີງຫຼັງການລະເບີດ ແລະ ປະເມີນຜົນຂອງການລະເບີດກ່ອນຈະຕັ້ງຄ່າຂອບເຂດຂອງບໍ່ອກແຮ່ໃນບໍ່ສຳລັບການຂຸດຄົ້ນ.

ການຕິດຕາມນີ້ກໍ່ເພື່ອເປັນການຮັບປະກັນຄຸນນະພາບຂອງແຮ່ເຄົ້າ ທີ່ຂົນໄປລານກອງແຮ່ ແລະ ປ້ອນເຂົ້າສູ່ໂຮງງານຜະລິດ ເພື່ອເຮັດໃຫ້ໄດ້ຮັບແຮ່ທີ່ມີຄຸນນະພາບຕາມແຜນທີ່ວາງໄວ້ ແລະ ເຮັດໃຫ້ພວກເຮົາສາມາດບັນລຸເປົ້າໝາຍການຜະລິດທີ່ວາງໄວ້.

***ສິ່ງທີ່ທ້າທາຍມີຄືແນວໃດ?:*** ເນື່ອງຈາກການແຜ່ລະບາດຂອງພະຍາດ COVID-19 ໄດ້ເຮັດໃຫ້ວິຊາການຂອງບໍລິສັດເຮຊາກອນ (Hexagon) ພົບຂໍ້ຫຍຸ້ງຍາກໃນການເດີນທາງ ໃນເວລາທີ່ກຳລັງຈະດຳເນີນການຈັດຕັ້ງປະຕິບັດໜ້າວຽກດັ່ງກ່າວທີ່ພາກສະໜາມເຊໂປນ ເຊິ່ງເປັນບໍ່ແຮ່ທຳອິດໃນອາຊີຕາເວັນອອກສ່ຽງໄຕ້ທີ່ນຳໃຊ້ເຕັກໂນໂລຊີດັ່ງກ່າວ ແລະ ເປັນໜຶ່ງໃນຜູ້ທຳອິດໃນໂລກທີ່ຈັດຕັ້ງປະຕິບັດລະບົບດັ່ງກ່າວ ຜ່ານລະບົບທາງໄກຈາກນອກສະຖານທີ່. ທີມງານຄວບຄຸມຄຸນນະພາບແຮ່, ພະແນກບໍລິການເຕັກນິກບໍ່ແຮ່ (MTS) ສາມາດຈັດຕັ້ງປະຕິບັດລະບົບດັ່ງກ່າວທີ່ພາກສະໜາມເຊໂປນໄດ້ຢ່າງເຕັມປະສິດທິພາບ ໂດຍຜ່ານການສະໜັບສະໜູນທາງອອນລາຍ ຈາກທີມງານເຮຊາກອນ ປະເທດອົດສະຕຣາລີ, ແລະ ການສະໜັບສະໜູນຈາກ ຄະນະຜູ້ບໍລິຫານໂຄງການເຊໂປນ, ພະແນກບໍລິການເຕັກນິກບໍ່ແຮ່, ແລະ ພະແນກຂຸດຄົ້ນແຮ່. ຂໍຊົມເຊີຍ!

***ຂັ້ນຕອນຕໍ່ໄປ?*** ຄາດຄະເນວ່າ ຈະເພີ່ມກຳລັງການຜະລິດແຮ່ເຄົ້າໃນປີ 2022, ພວກເຮົາຈະເຫັນ ການຕິດຕາມການເໜັງຕີງຫຼັງຈາກການລະເບີດຫີນໃນຫຼາຍໆບໍ່ ເພີ່ມຂຶ້ນ. ພະນັກງານໂຄງການເຊໂປນກໍໄດ້ສຳເລັດຫຼັກສູດການຝຶກອົບຮົມໄລຍະ 2 ຂອງ BMT ແລະ ໄລຍະສຸດທ້າຍໃນເດືອນເມສາ ໂດຍໃຊ້ເວລາ 2 ອາທິດໃນການລົງປະຕິບັດຕົວຈິງ ແລະ ການນຳໃຊ້ຊອບແວ. ພາຍຫຼັງສຳເລັດການຝຶກອົບຮົມ, ພະນັກງານ 13 ຄົນ ຢູ່ໂຄງການເຊໂປນ ໃນນັ້ນມີແມ່ຍິງ 1 ຄົນ ທີ່ສຶກສາຈົບດ້ານທໍລະນີສາດ ຈະເປັນບຸກຄົນທີ່ມີຄຸນສົມບັດຄົບຖ້ວນໃນການນຳໃຊ້ຊອບແວ BMT ນີ້.

ເຮຊາກອນ ເປັນບໍລິສັດນຳໜ້າລະດັບໂລກໃນການແກ້ໄຂບັນຫາດ້ານດິຈິຕອນ ແລະ ເຮັດວຽກຮ່ວມກັບ LXML ໄດ້ເກືອບສອງປີແລ້ວ. ບໍລິສັດມີຄວາມຊຳນິຊຳນານດ້ານການປະສົມປະສານເຄື່ອງເຊັນເຊີກວດຈັບ, ຊອບແວ, ເຕັກໂນໂລຊີອິດສະລະ ດ້ວຍການປະສົມປະສານຂະບວນການເຮັດວຽກທີ່ສຳຄັນ.



# 10 ອັນດັບ ບໍ່ແຮ່ ທີ່ໃຫຍ່ທີ່ສຸດໃນໂລກ

ການຂຸດຄົ້ນບໍ່ແຮ່ ສະໜອງໂລຫະ ແລະ ອຸດສະຫະກຳແຮ່ທາດໃຫ້ແກ່ສັງຄົມ ທີ່ພວກເຮົານຳໃຊ້ໃນຊີວິດປະຈຳວັນ. ໃນຂະນະທີ່ມີ 4 ວິທີການຂຸດຄົ້ນແຮ່ທີ່ແຕກຕ່າງກັນ, ເຊັ່ນ: ບໍ່ເປີດໜ້າດິນ, ບໍ່ໃຕ້ດິນ, ການລະບາຍແຮ່ ແລະ ການຮ່ອນແຮ່ໃກ້ແມ່ນ້ຳ, ແຕ່ການຂຸດຄົ້ນແບບບໍ່ເປີດໜ້າດິນ, ບໍ່ໃຕ້ດິນ ເປັນເຕັກນິກທີ່ນຳໃຊ້ແຜ່ຫຼາຍທີ່ສຸດ.

ໄດ້ຄົ້ນພົບຫຼັກຖານການຂຸດຄົ້ນແຮ່ເປັນເວລາຫຼາຍກວ່າພັນປີ ແລະ ຍັງມີຫຼັກຖານການຂຸດຄົ້ນບໍ່ແຮ່ໃນສະໄໝບູຮານທີ່ຂົງເຂດບໍ່ຄຳ-ທອງ ເຊໂປນ. ປັດຈຸບັນນີ້ ບໍ່ແຮ່ ທີ່ມີຄວາມໂດດເດັ່ນດ້ານຂະໜາດມີ: 'ບໍ່ຄີຣູນາ' ບໍ່ເຫຼັກໃຕ້ດິນທີ່ທັນສະໄໝ ຕັ້ງຢູ່ປະເທດ ສະວີເດັນ, 'ບໍ່ຊຸກຸຍການາຕາ' ບໍ່ທອງແບບເປີດໜ້າດິນທີ່ໃຫຍ່ທີ່ສຸດໃນໂລກ ຕັ້ງຢູ່ປະເທດຊິລີ ແລະ 'ບໍ່ເອວ ເຕນຽນເຕ້' ບໍ່ທອງໃຕ້ດິນທີ່ໃຫຍ່ທີ່ສຸດໃນໂລກ ຕັ້ງຢູ່ປະເທດຊິລີ ແລະ ບໍ່ເຫຼັກເປີດໜ້າດິນທີ່ໃຫຍ່ທີ່ສຸດໃນໂລກ ແມ່ນ 'ບໍ່ຄາຣາຈາສ' ຕັ້ງຢູ່ປະເທດບຣາຊິວ.

ເຮົາມາເບິ່ງ ບໍ່ແຮ່ຈຳນວນໜຶ່ງທີ່ມີຂະໜາດໃຫຍ່ທີ່ສຸດໃນໂລກ ດ້ານຂະໜາດ ແລະ ຜົນຜະລິດຄື:

1. ***ບໍ່ບິງແຮມ ແຄນຍອນ, ສະຫະລັດອາເມລິກາ*** (ເລີ່ມ 1903) - ບໍ່ທີ່ໃຫຍ່ທີ່ສຸດໃນໂລກດ້ານການຜະລິດທອງ. ປະລິມານແຮ່ທອງສະສົມກວ່າ 19 ລ້ານໂຕນ ໃນເນື້ອທີ່ 7.68 ກິໂລຕາແມັດ.
2. ***ບໍ່ກາດສ໌ໄວເລີ້, ເຢຍລະມັນ*** (1898), ບໍ່ລິກໄນ້ແບບເປີດໜ້າດິນ.
3. ***ບໍ່ຊຸກຸຍການາຕາ, ຊິລີ*** (1952) - ບໍ່ທອງແບບເປີດໜ້າດິນທີ່ໃຫຍ່ທີ່ສຸດໃນໂລກ, ຜະລິດໄດ້ປະມານ 5% ຂອງໂລຫະທອງທັງໝົດຂອງໂລກ.
4. ***ບໍ່ກີຣູນາ, ສະວີເດັນ*** (1898) - ບໍ່ເຫຼັກໃຕ້ດິນທີ່ທັນສະໄໝ.
5. ***ບໍ່ກຣາສເບີກ, ອິນໂດນີເຊຍ*** (1973) – ບໍ່ທອງ, ເງິນ ແລະ ຄຳ ແບບເປີດໜ້າດິນ ແລະ ໃຕ້ດິນຂະໜາດໃຫຍ່.
6. ***ບໍ່ເມີນີ, ຣັດເຊຍ*** (1957) - ບໍ່ເພັດ ແລະ ຂຸດບໍ່ທີ່ຂຸດຂະໜາດໃຫຍ່ທີ່ສຸດອັນດັບສອງຂອງໂລກ.
7. ***ບໍ່ເອວ ເຕນຽນເຕ້, ຊິລີ*** (1906) - ບໍ່ທອງໃຕ້ດິນທີ່ມີຂະໜາດໃຫຍ່ທີ່ສຸດໃນໂລກ. ສາມາດຜະລິດທອງໄດ້ປີລະ 500.000 ໂຕນ.
8. ***ບໍ່ໂອຢູ່ ໂຕກອຍ, ມົງໂກເລຍ*** (2001) - ບໍ່ຄຳ ແລະ ທອງໃຕ້ດິນ ແລະ ເປີດໜ້າດິນ.
9. ***ບໍ່ຄາຣາຈາສ, ບຣາຊິວ***, 1995: ບໍ່ເຫຼັກທີ່ໃຫຍ່ທີ່ສຸດໃນໂລກ.
10. ***ບໍ່ໂກນສະໄຕ້, ສະຫະລັດອາເມລິກາ*** (1986) – ຜະລິດຄຳຫຼາຍກວ່າ 44 ລ້ານອອນສ໌ ແລະ ເງິນຫຼາຍກວ່າ 80 ພັນອອນສ໌.

# ຄາດຕະກອນໃນເງົາມືດ






*ບົດບັນນາທິການຂຽນໂດຍ: ທ່ານ ປາລີວັດ ອິນທະວົງ, ຫົວໜ້າສາຍງານ - ປະຕິບັດ ແລະ ບໍລິການໂຄງການ, LXML ເນື່ອງໃນໂອກາດ ວັນສາກົນແຫ່ງການປູກຈິດສໍານຶກກ່ຽວກັບລະເບີດຝັງດິນ ແລະ ການຊ່ວຍເຫຼືອເພື່ອແກ້ໄຂບັນຫາລະເບີດຝັງດິນ*

ໃນຂະນະທີ່ເຫດການເສຍຊີວິດຈາກອຸປະຕິເຫດທາງທ້ອງຖະໜົນ, ການສູບຢາ, ມະເຮັງ ແລະ ພະຍາດ COVID-19 ສືບຕໍ່ເປັນຂ່າວໃນສື່ຕ່າງໆ, ການເສຍຊີວິດ ແລະ ການບາດເຈັບຈາກ ອຸປະຕິເຫດລະເບີດບໍ່ທັນແຕກ (UXO) ກໍຍັງສືບຕໍ່ກະທົບຕໍ່ຊຸມຊົນ ໃນ ສປປ ລາວ.

ໃນປີ 2021, ສປປ ລາວ ລາຍງານອຸປະຕິເຫດ UXO 31 ຄັ້ງ ໂດຍມີ ການບາດເຈັບ 44 ຄົນ ແລະ ເສຍຊີວິດ 11 ຄົນ.

ວຽກງານເກັບກູ້ລະເບີດບໍ່ທັນແຕກ ໃນ ສປປ ລາວ ກໍໄດ້ມີຄວາມຫຼ້າຊ້າ ຍ້ອນການລະບາດຂອງພະຍາດ COVID-19 ອັນໄດ້ເຮັດໃຫ້ມີຕົວເລກການບາດເຈັບສູງຂຶ້ນສົມທຽບໃສ່ປີກ່ອນ.

ໂດຍລວມ, ສປປ ລາວ ເປັນປະເທດທີ່ມີການຖິ້ມລະເບີດຕໍ່ຫົວຄົນທີ່ໜັກໜ່ວງທີ່ສຸດໃນໂລກ. ໃນລະຫວ່າງປີ 1964 ຫາ 1973 ແມ່ນມີການຖິ້ມລະເບີດຫຼາຍກວ່າ 2 ລ້ານໂຕນ ເທົ່າກັບປະມານ ບົມບີ້ຫຼາຍກວ່າ 270 ລ້ານໜ່ວຍ ທີ່ໄດ້ຖືກຖິ້ມລົງໃສ່ ສປປ ລາວ. ໃນນັ້ນ ມີປະມານ 30% ແມ່ນຍັງບໍ່ທັນແຕກເທື່ອ ແລະ ມີພຽງ 1% ທີ່ໄດ້ຖືກເກັບກູ້ ຫຼື ທຳລາຍ ຕັ້ງແຕ່ປີ 1996 ເປັນຕົ້ນມາ. ຍ້ອນແນວນັ້ນ ສປປ ລາວ ຈຶ່ງໄດ້ມີ ເປົ້າໝາຍການພັດທະນາແບບຍືນຍົງທີ່ 18 (SDG 18) ສະເພາະຂອງປະເທດ ແນໃສ່ "ຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ."

ບໍ່ຄຳ-ທອງ ເຊໂປນຕັ້ງຢູ່ເມືອງວິລະບູລີ ຂອງແຂວງສະຫວັນນະເຂດ ເຊິ່ງເປັນເມືອງໜຶ່ງທີ່ຖືກຖິ້ມລະເບີດລົງໃສ່ຫຼາຍທີ່ສຸດໃນປະເທດ. ຍ້ອນແນວນັ້ນ, LXML ຈຶ່ງໄດ້ນຳເອົາວຽກງານເກັບກູ້ລະເບີດທີ່ຍັງບໍ່ທັນແຕກ ເຂົ້າມາເປັນວຽກໜຶ່ງທີ່ສຳຄັນໃນວົງຈອນການຂຸດຄົ້ນ-ປຸງແຕ່ງ-ຜະລິດບໍ່ແຮ່ເພື່ອຮັບປະກັນໃຫ້ພະນັກງານ, ຊຸມຊົນ ແລະ ການດຳເນີນງານຂອງພວກເຮົາປອດໄພຈາກ ອຸປະຕິເຫດ UXO. LXML ມີທີມງານ UXO ທີ່ມີຄຸນວຸດທິລະດັບສາກົນ ເປັນຜູ້ດຳເນີນງານກວດກູ້ລະເບີດບໍ່ທັນແຕກເຫຼົ່ານີ້ ນັບແຕ່ ຂະບວນການສຳຫຼວດ, ກ່ອນການກໍ່ສ້າງ ແລະ ຂຸດຄົ້ນບໍ່ແຮ່ ຕະຫຼອດເຖິງ ການສະໜັບສະໜູນໂຄງການພັດທະນາຊຸມຊົນຂອງບໍລິສັດ ແລະ ການປູກຈິດສຳນຶກເຜີຍແຜ່ຂໍ້ມູນຄວາມຮູ້ກ່ຽວກັບ ຄວາມອັນຕະລາຍຂອງ UXO ຕໍ່ຊຸມຊົນເຈົ້າພາບ ແລະ ຊຸມຊົນທ້ອງຖິ່ນຂອງພວກເຮົາ.

ຕະຫຼອດທົດສະວັດຜ່ານມາ, ກົດເຫຼັກຂອງທີມງານເກັບກູ້ລະເບີດແມ່ນ ຫ້າມມີການມ້າງລູກລະເບີດ ຫຼື ເຄື່ອນຍ້າຍລູກລະເບີດໂດຍບໍ່ຈຳເປັນ. ທຸກຄັ້ງທີ່ກວດພົບແມ່ນຈະຕ້ອງມີການທຳລາຍລູກລະເບີດກັບທີ່. ທຸກຄົນພາຍໃນທີມເຂົ້າໃຈດີ ເຖິງຄວາມສ່ຽງສູງທີ່ຕິດພັນກັບວຽກງານຂອງພວກເຮົາ. ອຸປະຕິເຫດກໍເກີດຂຶ້ນໄດ້ທຸກເວລາ ຖ້າພວກເຮົາບໍ່ປະຕິບັດຕາມມາດຕະຖານເຕັກນິກສະເພາະທີ່ຖືກວາງອອກ. ຄວາມຜິດພາດໃດໆ ອາດໝາຍເຖິງການສູນເສຍຊີວິດ ແລະ ບໍ່ມີໂອກາດເປັນຄັ້ງທີສອງເພື່ອກັບໄປແກ້ໄຂ. ສະນັ້ນ ພວກເຮົາຕ້ອງເອົາໃຈໃສ່ ຝຶກຝົນຢ່າງດີ ແລະ ມີປະສົບການໃນການດຳເນີນງານທີ່ອັນຕະລາຍນີ້. ທີມງານບັນລຸການເຮັດວຽກເກັບກູ້ລະເບີດທີ່ປັດສະຈາກການບາດເຈັບມາໄດ້ 5 ປີຕິດຕໍ່ກັນ.

ນັບຕັ້ງແຕ່ປີ 1996, LXML ໄດ້ລົງທຶນ US$52 ລ້ານ ເຂົ້າໃນການເກັບກູລະເບີດທີ່ບໍ່ທັນແຕກ ແລະ ທຳລາຍລະເບີດກວ່າ 60.000 ໜ່ວຍ ເຊິ່ງ 90% ຂອງລະເບີດຈຳນວນນີ້ ແມ່ນພ້ອມທີ່ຈະລະເບີດຖ້າຫາກໄດ້ຮັບການກະທົບ. ໃນປີ 2021 ທີມງານພວກເຮົາໄດ້ທຳລາຍລູກລະເບີດຝັງດິນ 1.368 ໜ່ວຍ ແລະ ໄດ້ກວດກູ້ລະເບີດບໍ່ທັນແຕກໃນເນື້ອທີ່ຫຼາຍກວ່າ 7 ລ້ານ ກິໂລຕາແມັດ. ໃນຫວ່າງບໍ່ດົນມານີ້, LXML ໄດ້ລົງນາມບົດບັນທຶກຄວາມເຂົ້າໃຈກັບ ກະຊວງປ້ອງກັນຊາດ. ການຮ່ວມມືທີ່ມີມາຍາວນານນີ້ ສະໜັບສະໜູນວຽກງານເກັກກູ້ UXO ຢູ່ອ້ອມຂ້າງບໍ່ຄຳ-ທອງເຊໂປນ ແລະ ຍົກລະດັບຄວາມອາດສາມາດດ້ານວິຊາການ ເພື່ອຜົນປະໂຫຍດຂອງຄົນຮຸ່ນຫຼັງ. ບໍລິສັດສືບຕໍ່ຮ່ວມມືກັບ ກະຊວງປ້ອງກັນຊາດ ໃນການທົດສອບວິທີການ ແລະ ເຕັກໂນໂລຊີໃໝ່ໆ ໃນການເກັບກູ້ UXO.

LXML ຈະສືບຕໍ່ເຮັດວຽກຢ່າງໃກ້ຊິດກັບຊຸມຊົນທ້ອງຖິ່ນ ແລະ ເຈົ້າໜ້າທີ່ພາກລັດເພື່ອກວດຄົ້ນ ແລະ ທຳລາຍລະເບີດທີ່ບໍ່ທັນແຕກຢູ່ ອ້ອມຂ້າງບໍ່ຄຳ-ທອງເຊໂປນ ເພື່ອໃຫ້ທຸກຄົນປອດໄພຂຶ້ນ.






# ໜ່ວຍຮັບມືເຫດສຸກເສີນຈາກ LXML ກອບກູ້ເອົາຊີວິດຜູ້ລັກລອບຂຸດຄົ້ນແຮ່ບໍ່ຖືກຕ້ອງຕາມກົດໝາຍ ໃນແຂວງສະຫວັນນະເຂດ




ທີມງານກູ້ໄພສຸກເສີນຈາກ LXML ໄດ້ຮັບມືກັບອຸປະຕິເຫດຮ້າຍແຮງ ທີ່ມີ ປະຊາຊົນລັກລອບຂຸດແຮ່ທອງແບບພື້ນບ້ານໂດຍບໍ່ໄດ້ຮັບອະນຸຍາດ ຢູ່ ໃນເມືອງວິລະບູລີ ໃກ້ບໍ່ຄຳ-ທອງເຊໂປນ ແຂວງສະຫວັນນະເຂດ ໃນເວລາປະມານ 8:00 ໂມງແລງ ຂອງວັນທີ 31 ມັງກອນ 2022.

ມີຜູ້ຊາຍສອງຄົນ (ອາຍຸ 23 ແລະ 27 ປີ) ທີ່ຊອກຫາມາລາໄຄດ໌ (ທອງ ຫຼື "ຫີນຂຽວ") ທີ່ຕິດຢູ່ໃຕ້ດິນຫຼາຍແມັດໂດຍມີຫີນທັບ ໃນປ່ອງອຸມົງທີ່ພວກກ່ຽວຂຸດດ້ວຍຕົນເອງ ຢູ່ ທາງຂ້າງຂອງພູໜ່ວຍ ໜຶ່ງ. ຜູ້ຊາຍອີກຈຳນວນໜຶ່ງແມ່ນໄດ້ປົບໜີເພື່ອໄປຮ້ອງຫາຄວາມຊ່ວຍເຫຼືອ.

ກຸ່ມຄົນທີ່ເຫົ່າກັນເຂົ້າມາຂຸດຄົ້ນເອົາແຮ່ໂດຍລຳພັງ ແລະ ບັນດາຜູ້ຄ້າຂາຍແຮ່ທີ່ເຫັນແກ່ຜົນປະໂຫຍດສ່ວນຕົວ ແລະ ເປັນໜ້າລະອາຍຕໍ່ສັງຄົມ ສ່ວນໃຫຍ່ເປັນຜູ້ທີ່ຊຸກຍູ້ໃຫ້ສະມາຊິກຊຸມຊົນທີ່ບອບບາງ-ດ້ອຍໂອກາດ ລວມທັງເດັກນ້ອຍຊາວໜຸ່ມ ເພື່ອໃຫ້ພວກເຂົາເຈົ້າ ແບກຫາບຄວາມສ່ຽງຮ້າຍແຮງທີ່ສຸດເພື່ອໃຫ້ໄດ້ຮັບຜົນປະໂຫຍດຈາກສິ່ງທີ່ເປັນອັນຕະລາຍ. ອຸປະຕິເຫດຄັ້ງນີ້ຊີ້ໃຫ້ພວກເຮົາເຫັນເຖິງ ຄວາມອັນຕະລາຍອັນຫຼາກຫຼາຍທີ່ຕິດພັນກັບການຂຸດຄົ້ນແຮ່ແບບຜິດກົດໝາຍ. ມີຫຼາຍຄົນທີ່ໄດ້ເສຍຊີວິດຈາກອຸປະຕິເຫດຄ້າຍຄືກັນນີ້ ຢູ່ໃນ ສປປ ລາວ ແລະ ປະເທດອື່ນໆອ້ອມຂ້າງ.

ຫຼັງຈາກພະຍາຍາມຂຸດເອົາພວກເຂົາອອກມາແຕ່ບໍ່ໄດ້ຮັບຜົນ, ຄອບຄົວຂອງຜູ້ຊາຍທັງສອງຄົນ ແລະ ນາຍບ້ານກໍໄດ້ຮ້ອງຂໍຄວາມຊ່ວຍເຫຼືອຈາກ LXML ເພື່ອກອບກູ້ເອົາຜູ້ຊາຍທັງສອງດັ່ງກ່າວ. LXML ໄດ້ແຈ້ງເຈົ້າໜ້າທີ່ຕຳຫຼວດ ແລະ ອຳນາດການປົກຄອງທ້ອງຖິ່ນທັນທີ. ສະຖານທີ່ເກີດເຫດກໍຖືວ່າ ຫ່າງໄກສອກຫຼີກ ແລະ ລຳບາກກາກກຳໃນການເຂົ້າເຖິງ, ພື້ນດິນກໍປຽກ, ບວກກັບຄວາມສ່ຽງທີ່ຈະເກີດຫີນເຈື່ອນ ແລະ ຝົນກໍໃກ້ເຂົ້າມາທ່າມກາງຄວາມມືດມົນນັ້ນ ແຕ່ພະນັກງານ LXML ຫຼາຍຮ້ອຍຄົນດ້ວຍອຸປະກອນພິເສດ ກໍຍັງຕັ້ງໜ້າຕັ້ງຕາບຸກບືນຢ່າງບໍ່ຢຸດຢ່ອນຕະຫຼອດທັງຄືນເພື່ອພະຍາຍາມຊ່ວຍເຫຼືອຊີວິດຜູ້ຊາຍທັງສອງທີ່ຄ້າງຢູ່ປ່ອງອຸມົງ. ປະມານ 14 ຊົ່ວໂມງຜ່ານໄປ, ທີມງານຂຸດຄົ້ນຂອງ LXML ກໍສາມາດສ້າງຖ້ານເພື່ອໃຫ້ລົດຈັກສາມາດເຂົ້າເຖິງພື້ນທີ່ໄດ້ ແລະ ສາມາດກອບກູ້ເອົາຜູ້ຊາຍທັງສອງຄົນດັ່ງກ່າວອອກມາໄດ້ຢ່າງປອດໄພ. ພວກກ່ຽວໄດ້ຟື້ນຟູຕົວຢູ່ໂຮງໝໍ ທ່າມກາງສະມາຊິກຄອບຄົວທີ່ໂລ່ງອົກໂລ່ງໃຈ, ທັງສອງຄົນມີບາດແຜ ແລະ ຈຸດຊ້ຳເລັກໜ້ອຍ, ໂຊກດີທີ່ຍັງມີຊີວິດຢູ່.



ທ່ານ ພໍ ແຮຣີສ໌, ປະທານ LXML ໄດ້ກ່າວວ່າ: "ພວກເຮົາມີຄວາມກັງວົນເປັນຢ່າງຍິ່ງຕໍ່ຄວາມປອດໄພຂອງຊາວບ້ານຈຳນວນໜຶ່ງ ລວມທັງຄອບຄົວຂອງຜູ້ຊາຍທັງສອງ ເຊິ່ງອັນຕະລາຍອາດເຖິງແກ່ຊີວິດໄດ້ ຖ້າຫາກເກີດດິນເຈື່ອນໄປປິດປ່ອງອຸມົງ. ການກະທຳຂອງຜູ້ຄ້າຂາຍແຮ່ຜິດກົດໝາຍໄດ້ເຮັດໃຫ້ຊີວິດຂອງຊຸມຊົນຫຼາຍສິບຄົນຕົກຢູ່ໃນຄວາມອັນຕະລາຍ. ພວກເຮົາພາວະນາໃຫ້ຜູ້ອື່ນໆຖືອຸປະຕິເຫດຄັ້ງນີ້ເປັນບົດຮຽນ, ຄິດເຖິງ ຄອບຄົວ, ພໍ່ແມ່, ອ້າຍເອື້ອຍນ້ອງ, ສາມີ-ພັນລະຍາ ແລະ ລູກຂອງຕົນ ກ່ອນທີ່ຈະຕັດສິນໃຈເຮັດໃນສິ່ງທີ່ສ່ຽງດັ່ງເຊັ່ນນີ້ໃນອະນາຄົດ."

LXML ໄດ້ລາຍງານອຸປະຕິເຫດດັ່ງກ່າວນີ້ ຕໍ່ກະຊວງພະລັງງານ ແລະ ບໍ່ແຮ່, ເມືອງວິລະບູລີ ແລະ ແຂວງສະຫວັນນະເຂດ. ນອກຈາກນັ້ນ ກໍຈະສືບຕໍ່ເຮັດວຽກຢ່າງໃກ້ຊິດກັບຊຸມຊົນທ້ອງຖິ່ນ ແລະ ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບ ເພື່ອ ປູກຈິດສຳນຶກ ແລະ ຢຸດຕິຜູ້ຄ້າຂາຍແຮ່ແບບຜິດກົດໝາຍ ທີ່ເຮັດໃຫ້ຊີວິດຂອງປະຊາຊົນທ້ອງຖິ່ນມີຄວາມສ່ຽງ ກໍຄື ເພື່ອການປ້ອງກັນບໍ່ໃຫ້ເກີດອຸປະຕິເຫດເຊັ່ນນີ້ຂຶ້ນອີກໃນອະນາຄົດ.



## LXML ໄດ້ຮັບລາງວັນ ນັກທຸລະກິດຊັ້ນນຳດີເດັ່ນ ໃນໄລຍະ COVID-19

**29 ທັນວາ 2021** - LXML ໄດ້ຮັບລາງວັນ 'ນັກທຸລະກິດຊັ້ນນຳດີເດັ່ນ' ໃນໄລຍະ COVID-19. LXML ໄດ້ຮັບການຍ້ອງຍໍຊົມເຊີຍຕໍ່ກັບການປະກອບສ່ວນຂອງຕົນ ໃນການຮັບມືກັບການແຜ່ລະບາດຂອງເຊື້ອພະຍາດ COVID-19 ໃນ ສປປ ລາວ. ພະນະທ່ານ ພັນຄຳ ວິພາວັນ ນາຍົກລັດຖະມົນຕີແຫ່ງສປປ ລາວ ໄດ້ໃຫ້ກຽດເຂົ້າຮ່ວມເປັນສັກຂີພິຍານ ເພື່ອເປັນນິມິດໝາຍ ແລະ ໃຫ້ຄວາມສຳຄັນ. ທ່ານ ປອ ຄຳແພງ ໄຊສົມແພງ, ລັດຖະມົນຕີກະຊວງອຸດສະຫະກຳ ແລະ ການຄ້າ ໄດ້ໃຫ້ກຽດມອບໂລ້ລາງວັນ.

## LXML ສະໜັບສະໜູນທຸລະກິດລາວ

**25 ກຸມພາ 2022** – ຮອງຜູ້ຈັດການໃຫຍ່ ທ່ານ ສະໝານ ອະເນກາ ໄດ້ມອບ 80 ລ້ານກີບເປັນຄ່າສະມາສິກກິຕິມະສັກ ຫຼື VVIP ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ສຄອຊ) ໃຫ້ແກ່ ທ່ານ ດາວວອນ ພະຈັນທະວົງ, ຮອງປະທານກິຕິມະສັກຂອງ ສຄອຊ. ປີນີ້ເປັນປີທີ 9 ທີ່ LXML ເປັນສະມາຊິກ VVIP ປະກອບສ່ວນສະໜັບສິໜູນ ສຄອຊ.

## LXML ອຸປະຖຳ ງານຜະລິດຕະພັນລາວ

**23 ກຸມພາ 2022** – ພະນະທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ພັນຄຳ ວິພາວັນ ພ້ອມດ້ວຍລັດຖະມົນຕີກະຊວງອຸດສະຫະກຳ ແລະ ການຄ້າ ທ່ານຄຳແພງ ໄຊສົມແພງ ໄດ້ເຂົ້າຢ້ຽມຊົມຫ້ອງວາງສະແດງຂອງ LXML ຢູ່ສູນການຄ້າລາວໄອເຕັກ, ນະຄອນຫຼວງວຽງຈັນ ໃນງານເທດສະການວາງສະແດງຜະລິດຕະພັນລາວ ທີ່ LXML ໄດ້ປະກອບສ່ວນອຸປະຖຳ.

## LXML ສະໜັບສະໜູນການຫຼໍ່ຮູບປັ້ນວິລະຊົນຂອງ ສປປ ລາວ ພໍ່ກະດວດ

**04 ເມສາ 2022** - LXML ໄດ້ປະກອບສ່ວນ 50.000.000 ກີບ ເພື່ອສະໜັບສະໜູນການຫຼໍ່ຮູບປັ້ນວິລະຊົນຜູ້ສຳຄັນຂອງ ປະຊາຊົນລາວ ກໍຄື ພໍ່ກະດວດ ຢູ່ ແຂວງສະຫວັນນະເຂດ.

"ພໍ່ກະດວດ" ແມ່ນວິລະຊົນທີ່ເຄົາລົບຮັກຂອງປະຊາຊົນລາວ ໂດຍໄດ້ນຳຂະບວນຕໍ່ຕ້ານຈັກກະພັດຝຣັ່ງ ຢູ່ ແຂວງສະຫວັນນະເຂດ ແຕ່ປີ 1901 ເຖິງ 1911. ອະນຸສອນສະຖານຂອງພໍ່ກະດວດ ຕັ້ງຢູ່ວົງວຽນກົງກັນຂ້າມກັບ ໂຮງໝໍແຂວງສະຫວັນນະເຂດ.

## LXML ບໍລິຈາກທອງ ໃຫ້ແກ່ ວັດເທບນິມິດ ເພື່ອສ້າງພະພຸດທະຮູບ

**28 ມີນາ 2022** - LXML ໄດ້ມອບທອງ ຊຸດທີສອງ ຈຳນວນ 209 ກິໂລ ລວມທັງໝົດກວ່າ 319 ກິໂລ ໃຫ້ແກ່ວັດເທບນິມິດ (ທາດຝຸ່ນ), ນະຄອນຫຼວງວຽງຈັນ ເພື່ອຫຼໍ່ພະພຸດທະຮູບສຳລິດຈຳລອງພຣະພຸດທະສຸຣິຍະຣາຊມຸງຄຸລ ຈຳນວນ 5 ອົງ ເຊິ່ງເປັນພະພຸດທະຮູບສັກສິດຄູ່ບ້ານຄູ່ເມືອງ ໃນຍຸກສະໄໝອັນຈະເລີນຮຸ່ງເຮືອງຂອງ ອານາຈັກ ລ້ານຊ້າງ ພາຍໃຕ້ການປົກຄອງຂອງພະມະຫາກະສັດ ເຈົ້າສຸລິຍາວົງສາ ທຳມິກະຣາຊ ໃນຊຸມປີ 1600.

# ການປິດໂຮງງານເພື່ອສ້ອມແປງຢ່າງປອດໄພ ແລະ ປະສິດທິຜົນສູງ

ບໍ່ຄຳ-ທອງ ເຊໂປນໄດ້ປິດສ້ອມແປງໂຮງງານທັງໝົດ ເປັນໄລຍະເວລາ 8 ວັນ ແຕ່ວັນທີ 16 ເຖິງ 24 ພຶດສະພາ 2022.

ວິຊາການ 634 ຄົນ ລວມທັງຜູ້ຮັບເໝົາ 388 ຄົນ ໄດ້ດຳເນີນການກວດກາ ແລະ ແກ້ໄຂຈຸດຕ່າງໆຢ່າງລະອຽດ ເພື່ອໃຫ້ ໂຮງງານ ແລະ ອຸປະກອນເຄື່ອງຈັກທີ່ສຳຄັນ ສາມາດສືບຕໍ່ດຳເນີນງານໄດ້. ຕະຫຼອດໄລຍະການປິດສ້ອມແປງໂຮງງານນັ້ນແມ່ນບໍ່ມີການລາຍງານບາດເຈັບຮຸນແຮງ.

**ທ່ານ ຄຳໝັ້ນ ສີຫາລາດ, ຫົວໜ້າສາຍງານກົນຈັກ ແລະ ໂຮງງານ** ໄດ້ກ່າວວ່າ: "ການເອົາໃຈໃສ່ສຸມໃສ່ຄວາມປອດໄພແມ່ນມີຄວາມສຳຄັນທີ່ສຸດ ຍ້ອນວ່າມີຫຼາຍທີມງານ ແລະ ຜູ້ຮັບເໝົາທີ່ເຮັດວຽກສະເພາະດ້ານ ໃນສະພາບແວດລ້ອມທີ່ສ່ຽງອັນຕະລາຍ ໃນໄລຍະການປິດສ້ອມແປງໂຮງງານ. ພວກເຮົາສາມາດບັນລຸ 99% ຂອງ 741 ໜ້າວຽກໃນແຜນ ແລະ ໄດ້ແກ້ໄຂ 110 ໜ້າວຽກນອກແຜນ ໂດຍປັດສະຈາກ ການບາດເຈັບໃດໆ."

ຕະຫຼອດໄລຍະການປິດໂຮງງານ ກໍໄດ້ມີການຢຸດວຽກປະຊຸມ ເພື່ອແກ້ໄຂການລະເມີດ ລະບຽບການເຮັດວຽກໃນພື້ນທີ່ສູງ. ຜູ້ເຂົ້າຮ່ວມກໍໄດ້ປຶກສາຫາລື ມາດຕະການຄວບຄຸມທີ່ພະນັກງານ ແລະ ຜູ້ຮັບເໝົາຕ້ອງປະຕິບັດເພື່ອຮັບປະກັນຄວາມປອດໄພໃນເວລາເຮັດວຽກຢູ່ບ່ອນສູງ, ເຊັ່ນການໃສ່ສາຍຮັດກັນຕົກຢ່າງຖືກຕ້ອງເປັນຕົ້ນ.

ຂໍຂອບໃຈທຸກທ່ານທີ່ມີສ່ວນຮ່ວມໃນການບັນລຸການປິດສ້ອມແປງໂຮງງານໃນປີນີ້ ຢ່າງປອດໄພ!





ພຣະພຸດທະຮູບ ພຣະໃຫຍ່ອົງຕື້ ເດີນທາງມາຮອດ ວິລະບູລີ ຢ່າງປອດໄພ ໃນວັນທີ 20 ມັງກອນ 2022.



ຮູບແບບການເຈາະ ແລະ ລະເບີດຫີນ ຢູ່ ບໍ່ ດີສໂຄເວີຣີ ຕາເວັນຕົກ 2ເອ



ກະກຽມການລະເບີດຫີນ ເພື່ອເຈາະເຂົ້າອຸໂມງ ສຳຫຼວດບໍ່ໃຕ້ດິນ



ລົດຕັກ ສຳລັບບໍ່ໃຕ້ດິນໄດ້ມາຮອດສະໜາມເຊໂປນແລ້ວ




ໃນການບໍລິຈາກສ່ວນບຸກຄົນ ຂອງພະນັກງານຂອງບໍລິສັດ, ໃນຫວ່າງບໍ່ດົນມານີ້ ພະນັກງານ LXML ໄດ້ສະໜອງ ອຸປະກອນການແພດສຳຄັນໃຫ້ແກ່ ໂຮງໝໍແຂວງສະຫວັນນະເຂດ, ໜ່ວຍກູ້ໄພແຂວງສະຫວັນນະເຂດ, ໂຮງໝໍເມືອງວິລະບູລີ ແລະ ໂຮງໝໍເມືອງເຊໂປນ ເຊິ່ງໃນນັ້ນລວມມີ ຖັງອົກຊີ 40 ຖັງພ້ອມອຸປະກອນຄວບຄຸມອົກຊີ ແລະ ໜ້າກາກອົກຊີສຳລັບຜູ້ໃຫຍ່ ແລະ ເດັກນ້ອຍ.



ທີມງານສຸຂະພາບແຮງງານ ແລະ ສຸຂະອະນາໄມ, ໜ່ວຍງານບໍລິການອາຫານ ແລະ ພະແນກພົວພັນກັບຊຸມຊົນ ຂອງ LXML ໄດ້ຢ້ຽມຢາມກຸ່ມທຸລະກິດທ້ອງຖິ່ນຂອງເມືອງວິລະບູລີ ເພື່ອໂອ້ລົມ ແລະ ໃຫ້ຄວາມຄິດເຫັນກ່ຽວກັບ ເງື່ອນໄຂ ແລະ ມາດຕະຖານການສະໜອງອາຫານໃຫ້ແກ່ LXML

ທ່ານ ຫວາງ ຈຸ້ງນທົວ, ປະທານ ບໍລິສັດຊີເຟີງ ຂຸດຄົ້ນຄຳ ໄດ້ຢ້ຽມຢາມອຸມົງເພື່ອສຳຫຼວດແຮ່ໃຕ້ດິນ ເຊິ່ງ ໄດ້ເຈາະໄປໄດ້ປະມານ 265 ແມັດ.





LXML ບໍລິຈາກເຂົ້າສານໜຽວ 500ກກ ໃຫ້ແກ່ສະມາຄົມຄົນພິການແຫ່ງຊາດລາວ.

# 2021 HIGHLIGHTS

- ເລີ່ມຂຸດຄົ້ນແຮ່ ທີ່ບໍ່ຜາວັດ ແລະ ບໍ່ວັງຍາງ.
- ເລີ່ມວຽກໜ້າດິນ ສຳລັບການຂະຫຍາຍອ່າງນ້ຳຫາງແຮ່.
- ເລີ່ມການຂະຫຍາຍໃຫຍ່ລະບົບແຍກຄຳ.
- ເລີ່ມສຳຫຼວດໃນເຂດພາກພື້ນ ພາຍຫຼັງໄດ້ໂຈະໄປຫຼາຍປີ.
- ເລີ່ມການນຳໃຊ້ໂຮງງານອົກຊີແຊນ.
- ມຸ່ງໜ້າດຳເນີນການສຳລັບບໍ່ໃຕ້ດິນ.
- ກິດຈະກຳການຂຸດຄົ້ນແຮ່ ເພື່ອປັບປຸງປະສິດທິພາບ ແລະ ຜົນຜະລິດ (ຈັກຂຸ້ ເຄື່ອງສະແກນປະລິມານແຮ່ຢູ່ເທິງລົດ, ນຳໃຊ້ລົດຈັກໃໝ່, ສູນຄຸ້ມຄອງການດຳເນີນງານບໍ່ແຮ່)
- ສູນຄຸ້ມຄອງການດຳເນີນງານບໍ່ແຮ່ 'ເປັນລະບົບອອນລາຍ': ລະບົບ HxGN.

- ພະນັກງານ ແລະ ຜູ້ຮັບເໝົາ 99% ໄດ້ຮັບວັກຊີນ COVID-19.
- ສັກວັກຊີນ COVID-19 ເຂັມກະຕຸ້ນ ໂດຍໃຊ້ AstraZeneca.
- >45,000 ເທື່ອກວດຫາເຊື້ອ COVID-19 ໃນພາກສະໜາມ, ສະຫວັນນະເຂດ ແລະ ນະຄອນຫຼວງວຽງຈັນ.

- ກໍ່ສ້າງປະຕູນ້ຳ ສຳລັບການປົກປ້ອງສິ່ງແວດລ້ອມ ແລະ ການດຳເນີນງານທີ່ປອດໄພ.

- ປຸ່ງນຄອມພິວເຕີ.
- ປັບປຸງລະບົບວາຍຟາຍ ແລະ 4G
- ປັບປຸງລະບົບອິນໂດ້ 10

- ລາງວັນທຸລະກິດຊັ້ນນຳດີເດັ່ນ 2021.
- ຮັກສາລະດັບການດຳເນີນງານ A+.
- ໄດ້ຕໍ່ໃບອະນຸຍາດລົງທຶນ.
- ລົງນາມບົດບັນທຶກຄວາມເຂົ້າໃຈລະຫວ່າງ LXML ແລະ ກະຊວງປ້ອງກັນປະເທດ, ຕໍ່ຂອບວຽກງານເກັບກູ້ລະເບີດທີ່ບໍ່ທັນແຕກ.
- ການຢ້ຽມຢາມພາກສະໜາມຂອງການນຳຂັ້ນສູງ: ປະທານສະພາແຫ່ງຊາດ, ກຳມະການກົມການເມືອງສູນກາງພັກ ແລະ ປະທານກວດກາພັກ, ເຈົ້າແຂວງສະຫວັນນະເຂດ.
- ສະໜອງ US$500,000 ສຳລັບວຽກງານປ້ອງກັນ COVID-19.
- ເປີດໂຕເວັບໄຊ້ຂອງ LXML, ແລະ ການນຳໃຊ້ສື່ສັງຄົມອອນລາຍ.
- ເປີດກຸ່ມເຟສບຸກ ສຳລັບ ພະນັກງານ ແລະ ຜູ້ຮັບເໝົາຂອງ LXML.
- ການກັບມາດຳເນີນງານຂອງສູນຫວັຍກົງ.




**ຫ້ອງການ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (LXML Sepon)**
ຖະໜົນບູຣິຈັນ, ບ້ານ ໂພນສີນວນ, ເມືອງ ສີສັດຕະນາກ
ຕູ້ ປ.ນ. 4486, ນະຄອນຫຼວງວຽງຈັນ ສປປ ລາວ
ໂທ: (856-21) 268 200
ແຟັກ: (856-21) 268 201
ອີເມວ: LXML.Information@LXML.LA
ເວບໄຊ: www.lxml.la